# ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ

**Copyright © 2006 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1- 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1- 3
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 4-6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lesson 4-6
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 7- 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 7-10
Phaisane Somsith, Grace Baptist Church, Dallas, Texas

Teaching Procedures Writer for Lesson 11-13 & Easter Lesson
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 11-13 & Easter Lesson
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 1
# ຄວາມຫວັງສຳລັບຜູ້ທີ່ຫມົດຫວັງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ຊາມູເອນ 1-2:1

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1 ຊາມູເອນ 1:1-2:10

**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງນຳຄວາມຫວັງ ແລະຄວາມຍິນດີ ໃນເວລາມີສະພາບການຫມົດຄວາມຫວັງ ແລະຂາດຄວາມຍິນດີ

**ຄຳຖາມເພື່ອສຳຣວດ:** ທ່ານຄວນຈະກະທຳຢ່າງໃດ ເພື່ອຈະໄດ້ຮັບຄວາມຫວັງທີ່ສົມບູນໃນອະນາຄົດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະອະທິບາຍໃຫ້ເຂົ້າໃຈວ່າ ພຣະເຈົ້າໄດ້ນຳຄວາມຫວັງມາສູ່ນາງຮັນນາ ແລະປະຊາຊົນອິສຣາເອນ ແລະແນະນຳແນວທາງສຳລັບຄວາມຫວັງຂອງພວກເຮົາໃນອານາຄົດ.

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຄຣູສອນຈະອະທິບາຍແບບລວມໆ ວ່າໃນສມັຍຊາມູເອນເກີດນັ້ນ ບໍ່ມີເຈົ້າຊີວິດປົກຄອງບ້ານເມືອງ ແລະແນະນຳບົດຮຽນທີ່ຈະຮຽນໃນສາມເດືອນຕໍ່ໄປກ່ຽວກັບ 1ຊາມູເອນ ແລະ 2ຊາມູເອນ: "ການຕິດຕາມພຣະເຈົ້າ ເຖິງແມ່ນວ່າເວລາຈະປ່ຽນແປງກໍຕາມ."

   ອະທິບາຍເວລາຕໍ່ໄປນີ້:

   - 1105 ກ່ອນພຣະເຢຊູຄຣິດ--ຊາມູເອນເກີດ
   - 1020 ກ່ອນພຣະເຢຊູຄຣິດ--ຊາອູນເປັນກະສັດ
   - 1000 ກ່ອນພຣະເຢຊູເກີດ--ດາວິດເປັນກະສັດ

   ວາງຄຳຖາມ, ເປັນຫຍັງການສັບປ່ຽນດ້ານການເມືອງຈຶ່ງເປັນການຫຍຸ້ງຍາກສຳລັບມະນຸດທັງຫລາຍ? (ເວລາການແບ່ງແຍກຄວາມສັດຊື່, ການຂັດແຍ່ງ, ປ່ຽນແປງກົດຫມາຍແລະການປົກຄອງ, ປ່ຽນແປງເປົ້າຫມາຍຂອງປະເທດ.)

2. ນຳພາຫ້ອງຮຽນອ່ານພຣະທັມ ໂຣມ 15:4 *"ເພາະວ່າສິ່ງທີ່ຂຽນໄວ້ໃນສມັຍກ່ອນນັ້ນ ກໍຂຽນຂຶ້ນເພື່ອສັ່ງສອນເຮົາ ເພື່ອເຮົາຈະໄດ້ມີຄວາມຫວັງໂດຍຄວາມພຽນແລະຄວາມຊູໃຈດ້ວຍພຣະຄັມພີ"*
   ໃຫ້ນັກຮຽນຄົນນຶ່ງອະທິຖານຂໍຄວາມຫວັງຈາກພຣະເຈົ້າ.

### ນຳພາສຶກສາພຣະຄັມພີ

3. ໃຫ້ນັກຮຽນຄົນນຶ່ງອ່ານປະວັດເຣື່ອງນາງຮັນນາ 1ຊາມູເອນ 1:1-8 ດ້ວຍສຽງດັງ. ບອກໃຫ້ນັກຮຽນທຸກຄົນຕັ້ງ

ໃຈຟັງວ່າ ນາງຮັນນາເປັນຢ່າງໃດ? ເອນຄານາເປັນຢ່າງໃດ? ແລະປະນິນນາເປັນຢ່າງໃດ?

- ລອງໃຫ້ຄຳເຫັນລອງເບິ່ງກ່ຽວກັບການມີເມັຽຫລາຍຄົນເປັນຢ່າງໃດ?
- ພິຈາຣະນາເບິ່ງໃນ ຂໍ້ 4ຫາຂໍ້ 8 ແລ້ວ ບອກເຖິງນິດສັຍຂອງເອນຄານາວ່າເປັນຢ່າງໃດ?
- ອະທິບາຍຄຳວ່າ "ຖືກໃຈແຕ່ບໍ່ພໍໃຈ"
- ຖາມທຸກຄົນໃນຫ້ອງຮຽນວ່າ ນາງຮັນນາແລະນາງປະນິນນາເປັນຄົນຢ່າງໃດ?
- ຈະປິ່ນປົວໄດ້ດ້ວຍວິທີໃດ ຖ້າຫາກສິ່ງນີ້ຫາກເກີດຂຶ້ນໃນຍຸກປັດຈຸບັນນີ້?

4. ໃຫ້ນັກຮຽນອີກຄົນນຶ່ງອ່ານຄຳອະທິຖານຂອງນາງຮັນນາ 1 ຊາມູເອນ 1:9-18 ນຳພານັກຮຽນໃຫ້ຟັງຄຳສັນຍາທີ່ນາງຮັນນາອ້ອນວອນຕໍ່ພຣະເຈົ້າ. ທ່ານເດ, ທ່ານຈະສາມາດສັນຍາຕໍ່ພຣະເຈົ້າຢ່າງນີ້ຫລືບໍ່? ແມ່ນຫຍັງທີ່ສຳແດງອອກໃນຫົວໃຈຂອງນາງ.

## <u>ນຳໃຊ້ໃນຊີວິດປະຈຳວັນ</u>

5. ໃຫ້ສລູບເຣື່ອງໂດຍອ່ານ 1ຊາມູເອນ 1:19-28. ອ່ານຄຳເວົ້າຂອງນາງຮັນນາໃຫ້ດັງໆໃນ ຂໍ້ 27 ແລະ 28 ເຊີນນັກຮຽນຟັງໃຫ້ດີໃນການທີ່ຮັນນາ ແລະເອນຄານາຈະນຳລູກໄປຖວາຍໃຫ້ແກ່ພຣະເຈົ້າທີ່ເມືອງຊີໂລ ຄຳຖາມທີ 2 ໃຫ້ເຈົ້ຽບົດຮຽນທີ່ກ່າວວ່າ ເວລາທ່ານມີຄວາມຣະທົມຂົມຂື່ນທ່ານເຄີຍໃຫ້ຄຳສັນຍາແກ່ພຣະເຈົ້າຫລືບໍ່? ຖ້າເຄີຍ, ທ່ານໄດ້ຮັກສາຄຳສັນຍາຂອງທ່ານຫລືບໍ່? ແມ່ນຫຍັງແມ່ນສິ່ງທີ່ຂັດສົນ ທີ່ເຮັດໃຫ້ການຮັກສາຄຳສັນຍາຕໍ່ພຣະເຈົ້ານັ້ນຫຍຸ້ງຍາກ?

6. ອ່ານເພງສັຣເສີນຂອງນາງຮັນນາ 1ຊາມູເອນ 2:1-2 ແລ້ວກໍປິດບົດຮຽນດ້ວຍການຂອບໃຈທີ່ພຣະເຈົ້າຊົງລະນຶກເຖິງນາງຮັນນາ ແລະຄົນອິສຣາເອນໂດຍປະທານຊາມູເອນເປັນຂອງພຣະຣາຊທານ ຕາມຄຳຮ້ອງຂໍ. ອະທິຖານເພື່ອຜູ້ນຳປະເທດຂອງພວກເຮົາ ແລະອະນາຄົດຂອງປະເທດຂອງພວກເຮົາດ້ວຍ.

*ສຈ. ດຣ. ບຸຮໂຮມ ພົມມະຈັນ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 2
# ຕັ້ງໃຈຟັງແລະບອກກ່າວ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ຊາມູເອນ 3:1-4:1
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1 ຊາມູເອນ 2:11-4:1
**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອນຳຄວາມຫວັງມາສູ່ຜູ້ຮ້ອງຂໍທີ່ສິ້ນຫວັງ ເພື່ອຮັບຟັງແລະກ່າວດ້ວຍຖ້ອຍຄຳອັນສັກສິດ.
**ຄຳຖາມເພື່ອສຳຣວດ:** ເປັນຫຍັງຈຶ່ງພົບແຕ່ຄວາມຫຍຸ້ງຍາກ ໃນການທີ່ຈະກ່າວຄວາມຈິງຂອງພຣະເຈົ້າຢູ່ໃນໂລກນີ້ບໍ່ວ່າຈະຢູ່ໃນສະພາບການແບບໃດ?
**ຈຸດປະສົງຂອງບົດຮຽນ:** ເພື່ອສອນໃຫ້ເຮົາຮູ້ຟັງແລະຮູ້ເວົ້າພຣະຄຳອັນແທ້ຈິງຂອງພຣະເຈົ້າ ແລະຮູ້ຈັກສເນີແນະ ວ່າຈະຂ້າມຜ່ານຂັ້ນຕອນໄດ້ຢ່າງໃດ?

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຂຽນຫົວຂໍ້ບົດຮຽນໃສ່ກະດານ "ຕັ້ງໃຈຟັງແລະບອກກ່າວ" ຖາມ: "ຕັ້ງໃຈຟັງ"ຫມາຍຄວາມວ່າຢ່າງໃດ? (ຟັງດ້ວຍຄວາມຣະມັດຣະວັງ, ບັນທຶກໄວ້, ຟັງຢ່າງບໍ່ມີແນວຄິດຄອນແຄນ....) ແລ້ວຖາມຕໍ່ໄປ: "ບອກກ່າວ" ຫມາຍຄວາມວ່າຢ່າງໃດ? (ແນະນຳ, ຕັກເຕືອນ, ລາຍງານ...)
   ໃນບົດຮຽນນີ້ ພວກເຮົາຈະໄດ້ຕິດຕາມເບິ່ງການຟັງຂອງຊາຍຫນຸ່ມຊາມູເອນ ທີ່ລາວຟັງຄຳຮຽກເອີ້ນຂອງພຣະເຈົ້າ ແລະບອກກ່າວຢ່າງຈະແຈ້ງໃຫ້ແກ່ຜູ້ອື່ນ.
   ອ່ານຄຳຖາມເພື່ອສຳຣວດຂ້າງເທິງນີ້, ຫລັງຈາກນັ້ນກໍໃຫ້ອ່ານຈຸດປະສົງຂອງບົດຮຽນໃຫ້ນັກຮຽນຟັງຊ້າໆແລະຈະແຈ້ງ.

### ນຳພາການສຶກສາພຣະຄັມພີ

2. ກາງເຈັ້ຽໂປສເຕີ 4 ແຜ່ນ ແຕ່ລະແຜ່ນໃຫ້ແຕ້ມຮູບປູມເປົ້າ ແລະປູມເປົ້າແຕ່ລະຫນ່ວຍໃຫ້ຂຽນຊື່ໃສ່ດັ່ງນີ້: ໂຮຟນີ, ພີເນຮັສ, ເອລີ, ແລະ ຮັນນາ. ໃຫ້ນັກຮຽນພິຈາຣະນາເບິ່ງປະວັດເບື້ອງຫລັງຂອງແຕ່ລະຄົນ.
   1ຊາມູເອນ 2:11-26
   ເອີ້ນຜູ້ສມັກໃຈອ່ານ 2:11-17 ໃຫ້ຕັ້ງໃຈຟັງເຖິງລູກຊາຍຂອງເອລີ ວ່າພວກເຂົາມີຫນ້າທີ່ຫຍັງໃນການ
   - ຖວາຍ. ພວກເຂົາກະທຳຢ່າງໃດຕໍ່ຜູ້ທີ່ມາເຝົ້າພຣະເຈົ້າ? ຂຽນໃສ່ໃນປູມເປົ້າທີ່ຫມາຍໄວ້ວ່າ ໂຮຟນີ.
   - ໃຫ້ອີກຜູ້ນຶ່ງອ່ານ 2:22-25 ເອລີໄດ້ຫ້າມປາມລູກຂອງລາວຢ່າງໃດ? ຂຽນໃສ່ປູມເປົ້າທີ່ວ່າ ເອລີ.
   - ລູກຂອງເອລີຟັງຄວາມຂອງພໍ່ບໍ່? ຂຽນໃສ່ປູມເປົ້າທີ່ຊື່ວ່າ ພີເນຮັສ

- ໃຫ້ອີກຜູ້ນຶ່ງອ່ານ 2:18-21 ແລະ 26 ແລ້ວຖາມວ່າ ທ່ານຄິດຢ່າງໃດທີ່ຮັນນາແມ່ຂອງຊາມູເອນອະທິຖານເພື່ອລູກຂອງລາວທຸກວັນ? ຂຽນຄຳເວົ້າຂອງລາວໃສ່ປູມເປົ້າໜ່ວຍທີ່ຂຽນຊື່ວ່າ ຮັນນາ.

3. ເວົ້າຫຍໍ້ກ່ຽວກັບການທຳນວາຍເຖິງຄອບຄົວຂອງເອລີໃນອານາຄົດ. (2:27-36) ນຳເອົາຄຳຖາມທີ 5 ແລະ 3 ຈາກເຈ້ຍບົດຮຽນມາຖາມ ແລ້ວໃຫ້ນັກຮຽນຕອບ.

4. ອ່ານເຣື່ອງການຮຽກເອີ້ນຊາມູເອນໃນເວລາກາງຄືນ. 1ຊາມູເອນ 3:1-14 ເປັນຫຍັງພຣະເຈົ້າຈຶ່ງເອີ້ນໃນເວລາກາງຄືນ. ຫລາຍຄົນອາດຈະໃຫ້ຄວາມຄິດເຫັນແຕກຕ່າງກັນໄປ. ແຕ່ສຳລັບຂ້າພະເຈົ້າແລ້ວ, ຂ້າພະເຈົ້າຂໍໃຫ້ຄວາມເຫັນວ່າ ກາງຄືນເປັນເວລາປອດໃສ, ເປັນເວລາທີ່ມີຄວາມສັມພັນໄດ້ດີທີ່ສຸດ, ເປັນເວລາທີ່ມີດຽງບບໍ່ມີສຽງລົບກວນ ພຣະເຈົ້າຈຶ່ງເລືອກສັນເອົາເວລານີ້.
   ຄຳຖາມ: ເປັນຫຍັງຈຶ່ງເປັນການຍາກແທ້ ສຳລັບຊາມູເອນທີ່ຈະຈັດຕຽມການຮັບໃຊ້ພຣະເຈົ້າ?

5. ໃຫ້ອີກຄົນນຶ່ງອ່ານ 1 ຊາມູເອນ 3:15-18 ຖາມຄຳຖາມ 4 ແລະຄຳຖາມ 6 ຈາກເຈັ້ຽບົດຮຽນ ແລ້ວໃຫ້ນັກຮຽນຕອບ.

6. ສລູບບົດຮຽນໂດຍອ່ານ 1 ຊາມູເອນ 3:19-4:1

<u>ໜູນໃຈໃຫ້ມີການກະທຳ:</u>

7. ແມ່ນຫຍັງຄືການທ້າທາຍສຳລັບພວກເຮົາໃນວັນນີ້
   ຄຣູຈະອ່ານຄຳສອນທີ່ມາເຖິງພວກເຮົາໃນເຈັ້ຽບົດຮຽນ ແລ້ວກໍນຳພາການອະທິຖານ
   ໜູນໃຈໃຫ້ທຸກຄົນເຂົ້າເຝົ້າພຣະເຈົ້າໂດຍພ້ອມພຽງຮຽງໜ້າ

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ຄຳແນະນຳສຳລັບຄຣູສອນ
## ບົດຮຽນທີ 3
## ສີລາແຫ່ງຄວາມອຸປຖັມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 1 ຊາມູເອນ 7:2-17

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1 ຊາມູເອນ 7:2-17

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາຄວນວາງຄວາມເຊື່ອຂອງພວກເຮົາໄວ້ໃນພຣະເຈົ້າ ແທນທີ່ຈະວາງໄວ້ນຳ ວັດຖຸສິ່ງຂອງ ຫລືມະນຸດຄົນໃດຄົນນຶ່ງ

**ຄຳຖາມເພື່ອສຳຣວດ:** ຄວາມເຊື່ອໃນພຣະເຈົ້າຈະສອດຄ່ອງກັບຈັດຕັ້ງແລະວິຊາການຂອງໂລກນີ້ບໍ່?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະແນະນຳທ່ານໃຫ້ຮູ້ຈັກຫມູນໃຊ້ເຂົ້າໃນຊີວິດປະຈຳວັນ ຈາກການຮຽກເອີ້ນຂອງພຣະເຈົ້າຕໍ່ຊາມູເອນ.

### ແຜນການສິດສອນ

### ນຳເຂົ້າສູ່ຊີວິດຈິງ

1. ນຳເຄື່ອງຫມາຍຈັກສອງສາມອັນ ຈະແມ່ນປື້ມ, ຫລືເສື້ອກັນຫນາວ, ຫລືໂປສເຕີ້ເກົ່າໆມາແລ້ວຄຣູຈະອະທິບາຍເຖິງຄວາມເປັນມາຕ່າງໆ ກ່ອນທີ່ຈະມີມາເຖິງນີ້. ແລ້ວຖາມ: ເວລາໃດເຄື່ອງຫມາຍຈະກັບກາຍມາເປັນສິ່ງທີ່ສັກກາຣະບູຊາ? ເຄື່ອງຫມາຍນັ້ນຮັບໃຊ້ພວກເຮົາຢ່າງໃດແດ່?

2. ຄຳຖາມທີ່ຕໍ່ມານັ້ນກໍຄື: ດ້ວຍຄວາມເຊື່ອໃນພຣະຄັມພີໃຫມ່ ແມ່ນຫຍັງເປັນເຄື່ອງຫມາຍສຳລັບພວກເຮົາ?
    - ໄມ້ກາງແຂນ (ເປັນເຄື່ອງຫມາຍເຖິງຄວາມລອດພົ້ນ ໂດຍຜ່ານການຖວາຍຊີວິດຂອງພຣະເຢຊູ)
    - ຮ້ານທັມມາດ(ເປັນເຄື່ອງຫມາຍໃນການປ່າວປະກາດພຣະຄຳຂອງພຣະເຈົ້າ)
    - ບ່ອນຮັບສີນບັບຕິສະມາ (ເປັນເຄື່ອງຫມາຍໃນຊີວິດໃຫມ່ໃນພຣະເຢຊູຄຣິດ)
    - ໂຕະລະນຶກສຳລັບວາງດອກໄມ້ (ເປັນເຄື່ອງຫມາຍໃນການມາຣວມກັນ ເປັນກາຍຂອງພຣະເຢຊູຄຣິດ)

    ສິ່ງເຫລົ່ານີ້ເປັນສິ່ງທີ່ພວກເຮົາຄວນປົກປ້ອງຮັກສາ ໃນຄຣິສຕະຈັກຂອງພວກເຮົາ. ເປັນຫຍັງຈຶ່ງປົກປ້ອງຄຸ້ມຄອງ? ເປັນຫຍັງຈຶ່ງບໍ່ຄວນປົກປ້ອງຄຸ້ມຄອງ?

ຈະຫມູນໃຊ້ເຂົ້າໃນການດຳເນີນຊີວິດປະຈຳວັນຢ່າງໃດ?

### ສຶກສາພຣະຄັມພີ

3. ທ່າທີ 1 ສິ່ງທີ່ສະແດງອອກແລະຄວາມໂສກເສົ້າ. ຄຳຖາມ: ເປັນຫຍັງຄົນອິສຣາເອນຈຶ່ງເຊື່ອຫີບພຣະສັນຍາແທນທີ່ຈະເຊື່ອພຣະເຈົ້າ?
    ອ່ານໃນເຈັ້ຽບົດຮຽນແລະອະທິບາຍໃຫ້ນັກຮຽນເຂົ້າໃຈ.

4. ທ່ານທີ 2 ອ່ານພຣະທັມ 7:2-9 ໃຫ້ຕັ້ງໃຈຟັງ ເພື່ອຈະໄດ້ເຫັນຄຸນລັກສະນະຂອງຄົນອິສຣາເອນ, ຊາມູເອນ, ແລະຂອງພຣະເຈົ້າ. ແລ້ວໃຫ້ວາງຄຳຖາມ:
   - ໃນຂໍ້ 3 ຊາມູເອນກ່າວຢ່າງໃດຕໍ່ຄົນອິສຣາເອນ ຖ້າພວກເຂົາຢາກສແວງຫາພຣະເຈົ້າ?
   - ໃນຂໍ້ 5 ແລະ 6 ເມື່ອໄດ້ຍິນດັ່ງນັ້ນແລ້ວ ຊາວອິສຣາເອນກະທຳຢ່າງໃດ?
   - ໃນຂໍ້ 7 ແລະ 8 ແມ່ນຫຍັງເປັນສິ່ງທີ່ຈູງໃຈໃຫ້ຄົນອິສຣາເອນປາຖນາການຊ່ວຍເຫລືອຈາກພຣະເຈົ້າ?
   - ໃນຂໍ້ 9 ທ່ານທີສອງຢ່າງທີ່ຊາມູເອນກະທຳເພື່ອຄົນອິສຣາເອນນັ້ນມີຫຍັງແດ່? (ຖວາຍລູກແກະ ແລະຮ້ອງທູນຕໍ່ພຣະເຈົ້າ.

5. ທ່ານທີ 3 ອ່ານ 7:10-17 ແນະນຳໃຫ້ນັກຮຽນຟັງໃຫ້ດີ ໃນການທຳງານຂອງພຣະເຈົ້າ.
   ເບິ່ງໃນຄຳຖາມທີ 4 ໃນເຈັ້ຽບົດຮຽນ ແມ່ນຫຍັງຄືສີລາແຫ່ງຄວາມອຸປຖັມຂອງຄຣິສຕຽນ? ໃຫ້ນັກຮຽນໃຫ້ຄວາມຄິດຄວາມເຫັນ
   ທ່ານຈະເຮັດຢ່າງໃດເພື່ອໃຫ້ສະຖານທີ່ແຫ່ງນີ້ສົດຊື່ນແຈ່ມໃສຕລອດເວລາ? ໃຫ້ໂອກາດນັກຮຽນຕອບ
   ທ່ານຈະອະທິບາຍ ສີລາແຫ່ງຄວາມອຸປຖັມຢ່າງໃດ? (ພຣະເຈົ້າແມ່ນຄວາມອຸປຖັມຂອງຂ້ອຍ, ພຣະເຈົ້າແມ່ນສີລາຂອງຂ້ອຍ, ພຣະເຈົ້າຢູ່ນຳຊີວິດຂອງຂ້ອຍ .........)

<u>**ຄຳຫນູນໃຈສຳລັບວັນນີ້:**</u>

6. ທຸກມື້ທຸກວັນພວກເຮົາໄດ້ເຫັນເຄື່ອງຫມາຍ, ຮູບພາບຕ່າງໆ ແຕ່ສິ່ງທັງຫມົດເຫລົ່ານັ້ນແມ່ນສີພຣະຫັດຂອງພຣະເຈົ້າ, ເຮົາອາດຈະຮັກສາໃຫ້ເປັນຄວາມຊົງຈຳສຳລັບພວກເຮົາ. ສິ່ງນັ້ນຈະບໍ່ສາມາດຊ່ວຍເຮົາຢ່າງໃດໄດ້ນອກຈາກພຣະເຈົ້າຜູ້ຊົງພຣະຊົນພຽງຜູ້ດຽວເທົ່ານັ້ນ. ຈົ່ງວາງຄວາມເຊື່ອຂອງທ່ານໄວ້ກັບພຣະເຈົ້າ.

*ສຈ. ດຣ. ບຸນໂຮມ ພົມມະຈັນ*

# ບົດແນະນຳການສິດສອນ
# ບົດຮຽນທີ 4
# ການຊົງເລືອກອັນປລາດໃຈຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** 1 ຊາມູເອນ 9:1-4, 15-21, 10:1, 9-24

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1 ຊາມູເອນ 8-10

**ຈຸດສຳຄັນຂອງບົດຮຽນນີ້:** ວິທີຂອງພຣະເຈົ້າໃນການຊົງເລືອກຜູ້ທີ່ມາຮັບໃຊ້ພຣະອົງນັ້ນ ເມື່ອທຽບກັບວິທີຂອງມະນຸດ ເຮັດໃຫ້ເກີດຄວາມປລາດໃຈຫລາຍ.

**ຄຳຖາມເພື່ອການສຳຣວດ:** ເພາະວ່າພວກເຮົາເບິ່ງມະນຸດດ້ວຍກັນແລະສະພາບການຕ່າງໆຍ້ອນວ່າພວກເຮົາມີຂອບເຂດຈຳກັດແລ້ວ ພວກເຮົາຈະພາດໂອກາດອັນໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອສຶກສາເບິ່ງຊ່ອງທາງຂອງພຣະເຈົ້າໃນການຊົງເລືອກເອົາຊາອູນມາເປັນກະສັດຊຶ່ງເຮັດໃຫ້ພວກເຮົາເກີດຄວາມປລາດໃຈຫລາຍ ແລະເປັນບົດຮຽນໃຫ້ພວກເຮົາທີ່ສາມາດຈະນຳມາປະຕິບັດຕໍ່ມະນຸດດ້ວຍກັນແລະສະພາບການໃນສມັຍນີ້.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ຂຽນຄຳສັບສາມຄຳນີ້ໃສ່ເຈັ້ຽຂາວແຜ່ນໃຫຽ່ ຫລືກະດານແລ້ວແຕ່ທ່ານມີ: "ປະຊາທິປະໄຕ," ຣາຊາທິປະໄຕ," "ພຣະເຈົ້າທິປະໄຕ" (ພຣະເຈົ້າເປັນຜູ້ປົກຄອງໄພ່ພົນຂອງພຣະອົງ.) ຮ້ອງຂໍໃຫ້ສະມາຊິກຫ້ອງອະທິບາຍຄວາມຫມາຍຂອງຄຳສັບດັ່ງກ່າວນັ້ນ: ໃຫ້ຖາມວ່າ <u>ການປົກຄອງຂອງແຕ່ລະແບບມີຄວາມແຕກຕ່າງກັນຢ່າງໃດ?</u> (ໃຫ້ໃຊ້ຂໍ້ມູນໃນວັກທີນຶ່ງທີ່ມີຫົວຂໍ້ວ່າ "ປລາດໃຈໃນວິທີທາງເລືອກຂອງພຣະເຈົ້າ: ບໍ່ຕ້ອງການແລະບໍ່ຄິດບໍ່ຝັນວ່າ" <u>ໃນບົດຮຽນຂອງສະມາຊິກຫ້ອງ.</u>)

### ສຶກສາບົດຮຽນ

2. ໃຫ້ສະມາຊິກຫ້ອງຟັງພຣະທັມ 1 ຊາມູເອນ 8:1-9 ແລະຕຽມພ້ອມທີ່ຈະຕອບຄຳຖາມດັ່ງຕໍ່ໄປນີ້:
   - ໃນສະພາບການອັນໃດເປັນເຫດໃຫ້ຜູ້ນຳຂອງອິສຣາເອນຮ້ອງຂໍຢາກມີກະສັດ?
   - ອິສຣາເອນມີຄວາມຜິດບໍ່ທີ່ພວກເຂົາຢາກໄດ້ກະສັດ? ຜິດບໍ່ຫລືບໍ່ຜິດ?
   - ທ່ານຈະອະທິບາຍຢ່າງໃດໃນຄວາມເສັຽໃຈຂອງຊາມູເອນ?

3. ໃຫ້ສະມາຊິກກຸ່ມນຶ່ງໄປຄົ້ນຄວ້າ 1 ຊາມູເອນ 8:10-21 ແລະໃຫ້ພວກເຂົາມາບອກໃຫ້ສະມາຊິກທຸກຄົນຟັງວ່າຊີວິດຂອງຊາວອິສຣາເອນຈະມີການປ່ຽນແປງຢ່າງໃດເມື່ອຢູ່ໃຕ້ການປົກຄອງຂອງຣາຊາທິປະໄຕ.

4. ໃຫ້ແຕ້ມຫ້ອງສີ່ຫລ່ຽມຫົກຫ້ອງໃຫຽ່ໆໃສ່ເຈັ້ຽຂາວແຜ່ນໃຫຽ່ໃບທີສອງ (ເຫມືອນກັບຫ້ອງຂອງຮູບແຕ້ມກາຕູນ).

ໃຫ້ສລູບເຣື່ອງຈາກ 1 ຊາມູເອນ 9:1-27 ເປັນຫ້າພາກ. (ຊອກຫາຂໍ້ມູນໃນບົດຮຽນຂອງສະມາຊິກຫ້ອງ ທີ່ຢູ່ໃນຫົວເຣື່ອງ " ປລາດໃຈໃນວິທີທາງເລືອກຂອງພຣະເຈົ້າ: ບໍ່ຊີງຈະເປັນໄປໄດ້ແລະບໍ່ເຄີຍຮູ້ມາກ່ອນ." ) ໃຫ້ຢຸດຢູ່ໃນແຕ່ລະພາກ ເພື່ອໃຫ້ສະມາຊິກຫ້ອງອອກຄວາມເຫັນຕາມຄວາມເຂົ້າໃຈໃນເຣື່ອງນັ້ນ ແລ້ວຂຽນໃສ່ໃນຫ້ອງສີ່ຫລ່ຽມທີ່ໄດ້ແຕ້ມໄວ້ນັ້ນເປັນຂັ້ນຕອນ. (ຂໍ້ແນະນຳໄດ້ໃຫ້ຢູ່ຂ້າງຫລຸ່ມນີ້ ແຕ່ໃຫ້ເອົາຄວາມຄິດເຫັນຕາມຄວາມເຂົ້າໃຈຂອງສະມາຊິກຫ້ອງດີກວ່າ.) ປະຫ້ອງທີຫົກໃຫ້ເປັນຫວ່າງໄວ້ກ່ອນ.

| | | |
|---|---|---|
| (1) 1 ຊາມູເອນ 9:1-5 (ຊາອູນນຳຫາລໍທີ່ເສັຽໄປ) | (2) 1 ຊາມູເອນ 9:6-14 (ຊາອູນຊອກຫາຜູ້ທຳນວາຍ) | (3) 1 ຊາມູເອນ 9:15-17 (ພຣະເຈົ້າຊີ້ບອກຜູ້ທີ່ພຣະອົງເລືອກ) |
| (4) 1 ຊາມູເອນ 9:18-24 (ຊາອູນໄດ້ຮັບການຮັບຕ້ອນເຫມືອນກັບກະສັດ) | (5) 1 ຊາມູເອນ 9:25-10:1 (ຊາມູເອນທົດສົງກະສັດທີ່ພຣະເຈົ້າຊົງເລືອກ) | (6) |

5. ໃຫ້ແຕ້ມປ້າຍສາມອັນໃສ່ເຈັ້ຽຂາວແຜ່ນໃຫຍ່ໃບທີສາມ. ໃຫ້ຂຽນຫົວຂໍ້ວ່າ "ສັນຍາລັກຈາກພຣະເຈົ້າ." ໃຫ້ຜູ້ນຶ່ງອ່ານ 1 ຊາມູເອນ 10:1-8 ໃນຂນະດຽວກັນໃຫ້ສະມາຊິກຫ້ອງຊີ້ບອກສັນຍາລັກສາມອັນທີ່ຊາມູເອນໄດ້ບອກໃຫ້ຊາອູນຮູ້ໄວ້ກ່ອນ. ໃຫ້ຂຽນເຫດການທີ່ເກີດຂຶ້ນໃສ່ໃນປ້າຍນັ້ນ:
   - ຊາຍສອງຄົນ: "ໄດ້ພົບລໍແລ້ວ"
   - ສາມຄົນພ້ອມກັບເຄື່ອງຖວາຍ
   - ຜູ້ປະກາດພຣະທັມແລະພຣະວິນຍານຂອງພຣະເຈົ້າ

ໃຫ້ຮັບຮູ້ວ່າເຫດການສາມຢ່າງໄດ້ເກີດຂຶ້ນຕາມພຣະເຈົ້າໄດ້ກ່າວໄວ້. ໃນຫ້ອງທີຫົກ (ໃຫ້ເບິ່ງຂໍ້ທີສີ່) ໃຫ້ຂຽນໃສ່ໃນຫ້ອງທີສີ່ວ່າ " ພຣະເຈົ້າຮັບຮອງການຊົງເລືອກຂອງພຣະອົງ."

6. ໃຫ້ສລູບເຣື່ອງລາວໃນ 1 ຊາມູເອນ 10:17-24. ໃຫ້ອະທິບາຍເຣື່ອງຈົກສລາກ (ໃຫ້ເບິ່ງບົດຮຽນຂອງສະມາຊິກຫ້ອງ ໃນຫົວຂໍ້ "ປລາດໃຈໃນວິທີທາງເລືອກຂອງພຣະເຈົ້າ: ບໍ່ຫມັ້ນໃຈແລະບໍ່ກ້າຮັບເອົາຫນ້າທີ່." ໃຫ້ຖາມຄຳຖາມຕໍ່ໄປນີ້:
   - ພຣະເຈົ້າຊົງເຮັດໃຫ້ປະຊາຊົນເຂົ້າພາກສ່ວນຮັບຮອງກະສັດທີ່ພຣະອົງຊົງເລືອກໄວ້ຢ່າງໃດ?
   - ປະຊາຊົນໄດ້ຈັດຕຽມຢ່າງໃດໃນການເຂົ້າພາກສ່ວນໃນການຊົງເລືອກ?
   - ເປັນຫຍັງຊາອູນຈຶ່ງໄປລີ້ ທ່ານຄິດວ່າຢ່າງໃດ?
   - ທ່ານຈະເປັນຜູ້ສນັບສນູນ ຫລືວ່າຈະເປັນຜູ້ມ້າງ (ໃຫ້ອ່ານ 10:26-27)?

## ຫມູນໃຊ້ໃນການກະທຳ

7. ທ້າທາຍໃຫ້ສະມາຊິກຫ້ອງອອກຄວາມຄິດເຫັນຢ່າງຫນ້ອຍເຫດຜົນນຶ່ງວ່າ ຄະນະກັມມະການງເລືອກຕັ້ງອາດຈະເບິ່ງຂ້າມຄົນເຫລົ່ານີ້ ຊຶ່ງພຣະເຈົ້າໄດ້ຊົງເລືອກເອົາພວກເຂົາ:

   - ໂມເຊ (ລາວອາດຈະເວົ້າບໍ່ເກ່ງ; ລາວເຄີຍເປັນຄາດຕະກັມ, ອົບພະຍົບ 4:10-13)

- ກິເດໂອນ (ລາວມີຄວາມສົງໃສແລະເປັນຄົນຂີ້ຢ້ານ, ຜູ້ປົກຄອງ 6:13-16)
- ເອຊາເທີ (ນາງບໍ່ໄດ້ມາຈາກວົງກະສັດແລະນາງເປັນຄົນຕ່າງຊາດ, ເອຊາເທີ 4)
- ມາຣີອາ ມັກດາລາ (ນາງມີເບື້ອງຫລັງບໍ່ດີ, ລູກາ 8:1-3)
- ເປໂຕ (ລາວປະຕິເສດພຣະເຢຊູສາມເທື່ອ, ລູກາ 22:54-62)

ໃຫ້ຖາມສະມາຊິກຫ້ອງວ່າ <u>ແມ່ນຫຍັງທີ່ເຮັດໃຫ້ຄົນເຫລົ່ານີ້ເປັນຜູ້ນຳທີ່ເກີດຜົນໃນພາຣະກິດຂອງພຣະເຈົ້າ? ບົດຮຽນນີ້ໄດ້ສ້າງຄວາມໝັ້ນໃຈໃຫ້ພວກເຮົາຢ່າງໃດ ເມື່ອພຣະເຈົ້າຊົງຮ້ອງພວກເຮົາໃຫ້ຮັບເອົາພາຣະກິດຂອງພຣະອົງ?</u> ໃຫ້ປິດຫ້ອງຮຽນດ້ວຍການອະທິຖານຂອບຄຸນພຣະເຈົ້າທີ່ໄດ້ເລືອກ, ຊູກຳລັງ, ແລະໃຊ້ຄົນສາມັນທັມດາໃນວຽກງານຂອງພຣະອົງ.

*ສຈ. ບຸນເຮັ່ງ ພົງປຣະພັນ*

## <u>ບົດແນະນຳການສິດສອນ</u>
## <u>ບົດຮຽນທີ 5</u>
## <u>ຄວາມຈົງຮັກພັກດີສຸດຍອດ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນ:</u>** 1 ຊາມູເອນ 12

**<u>ຂໍ້ພຣະຄັມພີສຳລັບເບື້ອງຫລັງ:</u>** 1 ຊາມູເອນ 12

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຄວາມສັດຊື່ຕໍ່ພຣະເຈົ້າເຫນືອກວ່າທຸກສິ່ງ.

**<u>ຄຳຖາມເພື່ອການສຳຣວດ:</u>** ໃນພາກປະຕິບັດແລ້ວ ໃນຊີວິດຂອງທ່ານ ຄວາມຈົງຮັກພັກດີຂອງທ່ານຢູ່ກັບອັນໃດ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອບັນລະຍາຍເຣື່ອງຄວາມຈົງຮັກພັກດີ ຊາມູເອນຮຽກຮ້ອງໃຫ້ປະຊາຊົນອິສຣາເອນແລະໃຫ້ພວກເຂົາຕັດສິນໃຈ ເພື່ອໃຫ້ພວກເຂົາສະແດງອອກໃຫ້ເຫັນເຖິງຄວາມຈົງຮັກພັກດີຕໍ່ພຣະເຈົ້າໃນທາງໃດທາງນຶ່ງ.

### <u>ແຜນການສິດສອນ</u>

### <u>ຊີວິດສະພາບຕົວຈິງ</u>

1. ໃຫ້ຂຽນຫົວຂໍ້ "ຄວາມຈົງຮັກພັກດີ" ໃສ່ເຈັ້ຽໃບໃຫຍ່. ແລ້ວໃຫ້ຖາມພວກສະມາຊິກຫ້ອງຮຽນວ່າ <u>ພວກເຮົາປະຕິຍານຕົນວ່າຈະຈົງຮັກພັກດີຕໍ່ຜູ້ໃດ ຫລືສິ່ງໃດ?</u> ( ພວກເຂົາຄົງຈະຕອບວ່າ "ທຸງຊາດຂອງສະຫະຣັດ ອະເມຣິກາ, ແລະ "ສາທາຣະນາຣັດ ເຊິ່ງໄດ້ຕັ້ງຢູ່.") ໃຫ້ຕື່ມຂໍ້ຄວາມຈາກຄຳຖາມດັ່ງຕໍ່ໄປນີ້.
    - ໃນເມື່ອຕອນຄຳນັບທຸງຄຣິສຕຽນ, ພວກເຮົາຂໍປະຕິຍານຕົນວ່າ ພວກເຮົາຈະສັດຊື່ຕໍ່ຜູ້ໃດ? (... ພຣະຜູ້ໂຜດໃຫ້ພົ້ນ ເຊິ່ງຣາຊອານາຈັກຂອງພຣະອົງຊົງຕັ້ງຢູ່...")
    - ພວກເຮົາສາບານໃນພິທີແຕ່ງງານ, ພວກເຮົາປະຕິຍານຕົນໃຫ້ກັບຜູ້ໃດ? ("... ແລະຈະປະຖິ້ມທຸກສິ່ງ, ຂໍສົມສູ່ຢູ່ກັບເຈົ້າແຕ່ຜູ້ດຽວ...")
    - ເມື່ອພວກເຮົາເຂົ້າມາເປັນສະມາຊິກໂບດ ທາງໂບດໄດ້ຮຽກຮ້ອງໃຫ້ພວກເຮົາເຮັດຫຍັງແດ່? (ໃຫ້ສນັບສນູນໂບດໃນການມາໂບດ, ການຮັບໃຊ້, ແລະການຖວາຍ)

ໃຫ້ຖາມພວກເຂົາວ່າ, <u>ຄວາມຈົງຮັກພັກດີອັນສູງສຸດຂອງພວກເຮົາໃຫ້ກັບບ່ອນໃດ?</u> ໃຫ້ກ່າວເນັ້ນຈຸດສຳຄັນຂອງບົດຮຽນນີ້ ແລະໃຫ້ຕັ້ງຄຳຖາມເພື່ອຈະໄດ້ຄົ້ນຄວ້າບົດຮຽນນີ້ຕໍ່ໄປ.

2. ເມື່ອມີຄວາມຈົງຮັກພັກດີຈະຕ້ອງມີສິ່ງຂັດຂວາງເກີດຂຶ້ນໃນສ່ວນບຸກຄົນ ເຫມືອນກັບໃນເຣື່ອງລາວສັ້ນໆ ໃນ <u>ບົດຮຽນຂອງສະມາຊິກຫ້ອງ</u>, "**ທ່ານຈະວ່າຢ່າງໃດ? ແລະທ່ານຈະທຳຢ່າງໃດ?**" ໃຫ້ອ່ານຂໍ້ຄວາມໃນຈຸດປະສົງຂອງບົດຮຽນນີ້. ໃຫ້ສະມາຊິກຫ້ອງອອກຄວາມຄິດເຫັນກ່ຽວກັບຄວາມຂັດແຍ່ງໃນເຣື່ອງຄວາມສັດຊື່ ຫລືຄວາມຈົງຮັກພັກດີ.

### <u>ສຶກສາບົດຮຽນ</u>

3. ໃຫ້ທົບທວນເລື່ອງລາວຊາອູນໄດ້ຊັຍຊະນະນາຣາດກະສັດຂອງຊາວອັມໂມນ (1 ຊາມູເອນ 11.) ໃຫ້ຂຽນເປັນຫົວເລື່ອງເຫມືອນກັບຫນ້າຫນັງສືພິມ ແລ້ວເລົ່າເລື່ອງລາວເປັນຂັ້ນຕອນ. (ໃຫ້ເບິ່ງໃນ <u>ບົດຮຽນຂອງສະມາຊິກຫ້ອງ</u> ໃນຫົວຂໍ້ "ຄວາມຈົ່ງຮັກພັກດີຕໍ່ກະສັດ")
   - ກະສັດນາຣາດຂອງຊາວອັມໂມນມາບຂູ່ເອົາຫນ່ອຍຕາຂອງຊາວຢາເບັດ (1 ຊາມູເອນ 11:1-3)
   - "ຈະສູ້ຫລືຈະຕາຍ" ຊັກຊວນເອົາຄົນເປັນແສນ (1 ຊາມູເອນ 11:4-8)
   - ຊາອູນຜູ້ປົດປ່ອຍຕາມສັນຍາ (1 ຊາມູເອນ 11:9-11)
   - ຍົກໂທດຍົກກັມໃຫ້ຜູ້ສົງສັຍ (1 ຊາມູເອນ 11:12-13)
   - ຜູ້ຮັບຊັຍຊະນະສເລີມສລອງໃນການຮັບຊັຍທີ່ກິນການ (1 ຊາມູເອນ 11:14-15)

4. ໃຫ້ອ່ານຂໍ້ຄວາມສັ່ງລາຂອງຊາມູເອນ (1 ຊາມູເອນ 12:1-5) ໃນຂນະທີ່ຜູ້ຟັງຕັດສິນໃຈຢູ່ <u>ເປັນຫຍັງຈຶ່ງເຫັນວ່າສຳຄັນສຳລັບຊາມູເອນທີ່ໄດ້ຍິນຄຳຮັບຮ້ອງເຖິງຄວາມບໍຣິສຸດຂອງລາວ</u>? (ໃຫ້ເບິ່ງໃນ <u>ບົດຮຽນຂອງສະມາຊິກຫ້ອງ</u> ທີ່ຢູ່ໃນຫົວຂໍ້ "ຄວາມຈົງຮັກພັກດີຕໍ່ພຣະເຈົ້າ.") ໃຫ້ຖາມວ່າ, ຊາມູເອນຮັບສະພາບໃນການປ່ຽນບົດບາດຂອງຜູ້ນຳຢ່າງໃດ? ລາວສາມາດສອນພວກເຮົາຫຍັງແດ່ ເມື່ອມີການປ່ຽນແປງໃນຊີວິດສ່ວນຕົວຂອງພວກເຮົາ ແລະມີການປ່ຽນບົດບາດຢູ່ໃນໂບດ?

5. ໃຫ້ສະມາຊິກຫ້ອງຄົ້ນຄວ້າ 1 ຊາມູເອນ 12:6-15 ເຊັ່ນຕົວຢ່າງ ພຣະເຈົ້າຊົງຊ່ອຍຊາວອິສຣາເອນໃຫ້ພົ້ນຈາກອຳນາດຂອງສັດຕຣູຂອງພວກເຂົາ. ຕໍ່ໄປໃຫ້ຕັ້ງຄຳຖາມວ່າ:
   - ເຮັດຢ່າງໃດຊາວອິສຣາເອນຈຶ່ງຖືກຊົນຊາດອື່ນມາຢຶດຄອງພວກເຂົາ? (ຂໍ້ທີ 10.)
   - ພຣະເຈົ້າຊົງໃຊ້ວິທີໃດຈຶ່ງຊ່ອຍພວກເຂົາໃນສະພາບການຢ່າງນີ້? (ພຣະເຈົ້າຊົງໃຊ້ຜູ້ນຳທີ່ເຂັ້ມແຂງ.)
   - ເປັນຫຍັງໃນເຫດການທີ່ເກີດຂຶ້ນກັບນາຣາດ ຊຶ່ງເປັນເຫດການຄັ້ງທີຫ້າຈຶ່ງແຕກຕ່າງໄປຈາກເທື່ອກ່ອນ? (ອິສຣາເອນໄດ້ຮ້ອງຂໍເອົາກະສັດ.)

6. ໃຫ້ຂຽນຫົວຂໍ້ "ຮຽກຮ້ອງໃຫ້ມີຄວາມຈົ່ງຮັກພັກດີ" ໃສ່ເຈັ້ຽໃບໃຫຽ່ໃບທີສອງ. ໃຫ້ອ່ານຄຳທ້າທາຍຂອງຊາມູເອນໃນ 12:16-24 ໃນຂນະທີ່ພວກເຂົາຟັງ ໃຫ້ຟັງຂໍ້ຄວາມທີ່ຮຽກຮ້ອງໃຫ້ອິສຣາເອນຮັບໃນຂນະທີ່ພວກເຂົາມີກະສັດອົງໃຫມ່. ໃຫ້ສະມາຊິກຫ້ອງຊີ້ບອກຂໍ້ຄວາມທີ່ຮຽກຮ້ອງດັ່ງຕໍ່ໄປນີ້:
   - ຢ່າຫັນຫນີຈາກພຣະຜູ້ເປັນເຈົ້າ ຫລືໄປຮັບໃຊ້ພຣະອື່ນໆ.
   - ຈົ່ງຮັບໃຊ້ພຣະຢາໂຮວາ.
   - ຈົ່ງຢ້ານຢຳພຣະອົງແລະຮັບໃຊ້ພຣະອົງສຸດອົກສຸດໃຈຂອງພວກທ່ານ.
   - ຈົ່ງລະນຶກເຖິງງານອັນຍິ່ງໃຫຽ່ທີ່ພຣະອົງຊົງກະທຳສຳລັບພວກທ່ານ.

ໃຫ້ໃຊ້ຂໍ້ມູນຕ່າງໆໃນຫົວຂໍ້ "ຮຽກຮ້ອງໃຫ້ມີຄວາມຈົງຮັກພັກດີ" ໃນ <u>ບົດຮຽນຂອງສະມາຊິກຫ້ອງ</u> ເພື່ອເສີມຕື່ມບົດຮຽນ.

## <u>ຫມູນໃຊ້ໃນການກະທຳ</u>

7. ໃຫ້ຂຽນຫົວຂໍ້ໃຫມ່ໃສ່ເຈັ້ຽໃບທີສາມ "ພຣະທຽມສິບອົງຂອງອະເມຣິກາ." (America's Top Ten Idols) ໃຫ້ສະ

   ມາຊິກຫ້ອງແນະນຳອອກຄວາມຄິດເຫັນຕື່ມອີກ. (ລາຍການທີ່ແນະນຳ: ຄວາມຮັ່ງມີ, ຊື່ສຽງ, ຄວາມສນຸກ

ສນາມ, ເສີມສ້າງໃຫ້ຮູບຮ່າງສວຍງາມ, ຄວາມສຳເຣັດໃນວຽກງານ, ໄອສະຄຣີມ, ອອກແບບເສື້ອຜ້າ, ຄວາມສລຽວສລາດສຸດ, ພະລັງດ້ານທະຫານ, ຊັຍຊະນະດ້ານກິລາ.) ໃຫ້ຖາມວ່າ, ໃຫ້ເລືອກເອົາສາມອັນ ແມ່ນອັນໃດທີ່ກ່າວມານີ້ໄດ້ຕິດອັນດັບໃນປີນີ້ ຊຶ່ງເອີ້ນກັນວ່າ "ພຣະທຽມຂອງປີນີ້"?

ໃຫ້ອ່ານ 1 ຊາມູເອນ 12:20-21 ອີກເທື່ອນຶ່ງ ແລະໃຫ້ທ້າທາຍສະມາຊິກຫ້ອງໃນຂໍ້ຄວາມຕໍ່ໄປນີ້: ບໍ່ແມ່ນເວົ້າແຕ່ປາກວ່າພວກເຮົາເປັນຄົນມີຄວາມຈິງຮັກພັກດີຕໍ່ພຣະເຈົ້າ, ແຕ່ພາກປະຕິບັດຈະສະແດງອອກໃຫ້ເຫັນວ່າ ພວກເຮົາເປັນຄົນເວົ້າແທ້ທຳຈິງກັບພຣະອົງ. ໃຫ້ອະທິຖານ ເພື່ອພວກເຮົາຈະໄດ້ປັບຕົວໃຫ້ຄວາມຈິງຮັກພັກດີຂອງພວກເຮົາຍຶດເອົາພຣະເຈົ້າກ່ອນອື່ນໝົດ.

*ສຈ. ບຸນເຮັ່ງ ພົງປຣະພັນ*

# ບົດແນະນຳການສິດສອນ

# ບົດຮຽນທີ 6

# ເມື່ອຊີວິດເປັນຮ້າຍແທ້ຮ້າຍວ່າ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** 1 ຊາມູເອນ 15:10-31

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 1 ຊາມູເອນ 13-15

**ຈຸດສຳຄັນຂອງບົດຮຽນນີ້:** ການບໍ່ເຊື່ອຟັງເປັນການກະທຳອັນບໍ່ຖືກຕ້ອງແລະນຳໂທດມາສູ່ຕົນ ບໍ່ວ່າຈະພະຍາຍາມຫາຂໍ້ແກ້ຕົວຢ່າງໃດກໍຕາມ.

**ຄຳຖາມເພື່ອການສຳຫລວດ:** ເປັນການຖືກຕ້ອງບໍ່ ການບໍ່ເຊື່ອຟັງໄດ້ນຳໂທດມາສູ່ຕົນ ທັງທີ່ພວກເຮົາມີເຫດຜົນພຽງພໍ?

**ຈຸດປະສົງຂອງບົດຮຽນນີ້:** ໂດຍກ່າວເຖິງການປະພຶດຂອງຊາອູນແລະການລົງໂທດເຊິ່ງເປັນຜົນທີ່ຕາມມາ.

## ແຜນການສິດສອນ

### ຊີວິດສະພາບຕົວຈິງ

1. ໃຫ້ເລີ່ມບົດຮຽນນີ້ໂດຍກ່າວວ່າ ມື້ນີ້ພວກເຮົາຈະມາເບິ່ງຊີວິດຂອງກະສັດຊາອູນ. ພວກເຮົາຈະມາເປັນພະຍານໃນເຣື່ອງນີ້ຊຶ່ງພຣະເຈົ້າໃຫ້ໂອກາດລາວສາມເທື່ອໃນການນຳພາຂອງລາວ. ເປັນເຣື່ອງໂສກແທ້ເມື່ອພຣະເຈົ້າໃຫ້ໂອກາດຜູ້ໃດຜູ້ນຶ່ງ ແລະຜູ້ນັ້ນກໍເຮັດຜິດພາດ. ໃຫ້ກ່າວຂໍ້ຄວາມຈາກຈຸດສຳຄັນຂອງບົດຮຽນນີ້ ແລະຂໍ້ຄຳຖາມຈາກຄຳຖາມເພື່ອການສຳຫລວດ.

### ສຶກສາບົດຮຽນ

2. ໃຫ້ຂຽນຫົວຂໍ້ນີ້ "ຊາອູນ: ການປະພຶດແລະຄວາມຈອງຫອງ" (1 ຊາມູເອນ 13:1-22) ໃສ່ເຈັ້ຽໃບໃຫຍ່ໃບທີນຶ່ງ ແລະໃຫ້ໃຊ້ຂໍ້ມູນຈາກ ບົດຮຽນຂອງສະມາຊິກຫ້ອງ. ໃຫ້ໃຊ້ຂໍ້ຄິດດັ່ງຕໍ່ໄປນີ້:

- ໃຫ້ອ່ານ 1 ຊາມູເອນ 13:1-7 ແລະໃຫ້ບັນລະຍາຍເຫດການຄັບຂັນທີ່ຊາອູນໄດ້ປະເຊີນໃນຂນະທີ່ລາວກຳລັງຄອຍຖ້າຊາມູເອນ.

- ໃຫ້ສລຸບຂໍ້ທີ 8-12 ຮ່ວມທັງເຫດຜົນຂອງການບໍ່ເຊື່ອຟັງຂອງຊາອູນ.

- ໃຫ້ທົບທວນຄຳແນະນຳຂອງຊາມູເອນໃນພຣະທັມ 1 ຊາມູເອນ 8:10.

- ໃຫ້ອ່ານຄຳກ່າວຂອງຊາມູເອນ (1 ຊາມູເອນ 13:13-14) ແລະຖາມວ່າ, ເປັນຫຍັງຊາມູເອນແລະພຣະເຈົ້າຈຶ່ງເນັ້ນຫນັກໃຫ້ຊາອູນປະຕິບັດຕາມຄຳແນະນຳ? ເປັນຫຍັງກະສັດບໍ່ສາມາດປະຕິບັດຫນ້າທີ່ແທນປະໂລຫິດ?

3. ໃຫ້ຂຽນຫົວຂໍ້ນີ້ "ຊາອູນ: ຜູ້ຊັຍຊະນະແລະຜູ້ຊົ່ວຮ້າຍ" (1 ຊາມູເອນ 13:22-14:52) ໃສ່ເຈັ້ຽໃບໃຫຍ່ໃບທີສອງ

ແລະໃຫ້ໃຊ້ຂໍ້ມູນຈາກ <u>ບົດຮຽນຂອງສະມາຊິກຫ້ອງ.</u> ໃຫ້ໃຊ້ຂໍ້ຄິດດັ່ງຕໍ່ໄປນີ້:

- ໃຫ້ສລຸບເຣື່ອງລາວຂອງໂຢນາທານທີ່ໄດ້ເຂົ້າໄປຕໍ່ສູ້ກັບພວກຟີລິສຕິນ, ຄວາມສັບສົນໃນຄ້າຍຂອງພວກຟີລິສຕິນ, ແລະໄຊຊະນະຂອງພວກອິສຣາເອນ (1 ຊາມູເອນ 14:1-23).
- ໃຫ້ບັນລະຍາຍເຣື່ອງຄຳສັ່ງຊຶ່ງເປັນຄຳສາບແຊ່ງອັນໂງ່ຈ້າຂອງຊາອູນ ທີ່ໃຫ້ພວກທະຫານຂອງລາວອົດອາຫານ, ໂຢນາທານບໍ່ຮູ້ບັງເອີນໄປຝ່າຝືນຄຳສັ່ງຂອງພໍ່ລາວ, ແລະພວກທະຫານໄດ້ຊ່ອຍລາວໄວ້(14:23-45).
- ໃຫ້ຖາມວ່າ, <u>ຄົນຂອງຊາອູນມີຄວາມຮູ້ສຶກຢ່າງໃດຫລັງຈາກເຫດການນີ້ໄດ້ເກີດຂຶ້ນ?</u>

4. ໃຫ້ຂຽນຫົວຂໍ້ນີ້ "ຊາອູນ: ຄວາມໂສກເສົ້າເສັຽໃຈແລະຖືກປະຕິເສດ" (15:1-35) ໃສ່ເຈັ້ຽໃບໃຫຍ່ໃບທີສາມ ແລະໃຫ້ໃຊ້ຂໍ້ມູນຈາກ <u>ບົດຮຽນຂອງສະມາຊິກຫ້ອງ.</u> ໃຫ້ໃຊ້ຂໍ້ຄິດດັ່ງຕໍ່ໄປນີ້:

- ໃຫ້ສລຸບຂໍ້ຄຳສັ່ງທີ່ຊາອູນໄດ້ຮັບແລະລາວບໍ່ໄດ້ປະຕິບັດຕາມ (1 ຊາມູເອນ 15:1-9).
- ໃຫ້ຜູ້ນຶ່ງອ່ານ 1 ຊາມູເອນ 15:10-15, ແລະໃຊ້ຄຳຖາມຂໍ້ທີ 1 ແລະ 2 ຈາກ <u>ບົດຮຽນຂອງສະມາຊິກຫ້ອງ.</u>
- ໃຫ້ຜູ້ນຶ່ງອ່ານ 1 ຊາມູເອນ 15:16-21, ແລະໃຊ້ຄຳຖາມຂໍ້ທີ 3 ແລະ 4 ຈາກ <u>ບົດຮຽນຂອງສະມາຊິກຫ້ອງ.</u>

## <u>ຫມູນໃຊ້ໃນການກະທຳ</u>

5. ໃຫ້ອ່ານ 1 ຊາມູເອນ 15:22-23. ໃຫ້ຖາມວ່າ, <u>ແມ່ນຫຍັງຄືສິ່ງທີ່ພຣະເຈົ້າຮຽກຮ້ອງນຳຊາອູນ ແລ້ວລາວບໍ່ໃຫ້ພຣະເຈົ້າ? ແລະແມ່ນຫຍັງທີ່ຊາອູນໃຫ້ພຣະເຈົ້າແລ້ວພຣະອົງຊົງປະຕິເສດ? ເປັນຫຍັງພຣະເຈົ້າຈຶ່ງຮຽກຮ້ອງເອົາການເຊື່ອຟັງຈາກພວກເຮົາ?</u>

*ສຈ. ບຸນເຣັ່ງ ພົງປຣະພັນ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 7
# ຮູບຮ່າງແລະຈິດໃຈ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຊາມູເອນທີນຶ່ງ 16: 1-13, 21-23
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ຊາມູເອນທີນຶ່ງ 16
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າບໍ່ໃຫ້ພວກເຮົາເບິ່ງຮູບຮ່າງພາຍນອກ ແຕ່ໃຫ້ເບິ່ງທີ່ຈິດໃຈ.
**ຄຳຖາມເພື່ອການສຳຣວດ:** ຈະມີຫຍັງຜິດບໍ່ ຖ້າພວກເຮົາບອກວ່າ "ຮູບພາບສຳຄັນກ່ວາທຸກຢ່າງ"?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະເອົາຕົວຢ່າງຈາກພຣະເຈົ້າໃນການເບິ່ງທີ່ຈິດໃຈ ແທນທີ່ຈະເບິ່ງແຕ່ຮູບຮ່າງ ພາຍນອກ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເອົາຮູບຫົວໃຈສີແດງໃບໃຫຍ່ໆແຜ່ນນຶ່ງຕິດໃສ່ໄກ້ກະດານຕໍ່ໜ້ານັກຮຽນ. ເອົາຮູບຄອບຄົວທີ່ສົມບູນດີແຜ່ນນຶ່ງຕິດໃສ່ໃນກາງຮູບຫົວໃຈ. ຖາມ: ມີຫຍັງຜິດບໍ່ຖ້າພວກເຮົາຈະເວົ້າວ່າ "ຮູບພາບສຳຄັນກວ່າທຸກຢ່າງ"? ໃຫ້ຜູ້ນຶ່ງອ່ານຄຳນຳໃນບົດຮຽນນີ້.

2. ພານັກຮຽນບອກຊື່ຂອງບຸກຄົນທີ່ດີເລີດຫລາຍໆຄົນໃນພຣະຄັມພີ. ອອກຊື່ດາວິດຖ້າບໍ່ມີໃຜກ່າວເຖິງ. ເວົ້າເຖິງລັກສະນະຂອງດາວິດໃຫ້ນັກຮຽນຟັງ (ໃຫ້ຄຣູເປັນຜູ້ຄົ້ນຄວ້າມາ) ແລະແນະນຳບົດຮຽນສຳລັບມື້ນີ້.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ຂຽນຫົວຂໍ້ໃຫຍ່ໃສ່ກະດານ:
   (1) ມີຫຍັງຕໍ່ໄປ (16:1)
   (2) ຮ້າຍ, ໂສກເສົ້າ, ບໍ່ດີໃຈ, ແລະຢ້ານກົວ (16:2-3)
   (3) ພະລັງຂອງອິດທິພົນ (16:4-5)
   (4) ເນື້ອໃນຂອງເຣື່ອງ (16:6-7)
   (5) ສຶກສາເບິ່ງສາຍຕາ (16:8-13)
   (6) ຮູ້ສຶກສະບາຍຂຶ້ນ (16:21-23)

4. ອ່ານຊາມູເອນນຶ່ງ 16:1 ແລະໃຊ້ບົດຮຽນເພື່ອຊ່ວຍໃນການອະທິບາຍ. ຖາມ: ເວລາພຣະເຈົ້າມອບວຽກໃຫ້ທ່ານເຮັດ, ຈຳເປັນບໍ່ທີ່ທ່ານຈະຕ້ອງລໍຖ້າຈົນກວ່າພຣະເຈົ້າຊົງສັ່ງວ່າ "ໃຫ້ລົງມືໄດ້"?

5. ເບິ່ງຫົວຂໍ້ທີສອງໃນບົດຮຽນ. ໃຫ້ຜູ້ນຶ່ງອ່ານ 16:2-3. ໃຫ້ນັກຮຽນຕອບຄຳຖາມຕໍ່ໄປນີ້:
   ກ. ເປັນຫຍັງຜູ້ປະກາດພຣະທັມຊາມູເອນຈຶ່ງເກີດມີຄວາມຢ້ານ?

ຂ. ພຣະເຈົ້າຊົງຕອບລາວແນວໃດ?

ຄ. ເວລາມີສິ່ງທີ່ຈະຕ້ອງເຮັດ, ພຣະເຈົ້າມີພາຣະຫຍັງແດ່?

ງ. ພາຣະພວກເຮົາມີແນວໃດແດ່?

ບອກນັກຮຽນວ່າ: ແມ່ນແຜນຂອງພຣະເຈົ້າ. ພວກເຮົາມີໜ້າທີ່ເຮັດຕາມການຊົງນຳ. ບາງຄັ້ງເຮົາອາດຈະໄດ້ເລີ້ມດ້ວຍຄວາມເຊື່ອ. ຖາມຄຳເຫັນຂອງນັກຮຽນຈາກຂໍ້ຄວາມນີ້: "ຄວາມເຊື່ອຄືການເດີນໄປຈົນສຸດແສງໄຟທີ່ທ່ານຫລຽວເຫັນ ແລ້ວເດີນໄປຕື່ມອີກກ້າວນຶ່ງ." ຂຽນຄຳເຫັນໃສ່ກະດານໄວ້.

6. ເບິ່ງຫົວຂໍ້ທີສາມ ແລະໃຫ້ຜູ້ນຶ່ງອ່ານ 1:4-5. ຕັ້ງຄຳຖາມໂດຍໃຊ້ຄຳຖາມຂໍ້ສາມໃນບົດຮຽນ. ສົນທະນາກັນເຣື່ອງຄວາມຢ້ານ. ຖາມ: ຊາມູເອນຊ່ວຍແກ້ໃຂຄວາມຢ້ານຂອງປະຊາຊົນແນວໃດ?

7. ອ່ານ 16:6-7 ສຳລັບບົດຮຽນໃນຫົວຂໍ້ທີສີ່. ຕັ້ງຄຳຖາມໂດຍໃຊ້ຄຳຖາມຂໍ້ສີ່ໃນບົດຮຽນ. ຖາມ: ມີບົດຮຽນແນວໃດແດ່ທີ່ຊາມູເອນຈະຕ້ອງໄດ້ຮຽນ?

8. ເບິ່ງຫົວຂໍ້ທີຫ້າໃນບົດຮຽນ. ໃຫ້ແຕ່ລະຄົນອ່ານແລະພິຈາຣະນາເບິ່ງຢ່າງງຽບໆ 16: 8-13. ເບິ່ງຄວາມແຕກຕ່າງລະຫວ່າງສາຍຕາຂອງພວກເຮົາແລະສາຍຕາຂອງພຣະເຈົ້າ. ຖາມ: ພວກເຮົາຈະເຫັນແບບພຣະເຈົ້າໄດ້ວິທີໃດ?

9. ອ່ານຫົວຂໍ້ສຸດທ້າຍ ແລະ 16:21-23. ຖາມ: ດາວິດເຂົ້າມາໃນວັງຂອງກະສັດຊາອູນໄດ້ວິທີໃດ? ຈົ່ງຈົດຈຳໄວ້ວ່າຊາອູນບໍ່ຮູ້ວ່າດາວິດໄດ້ຮັບການຊະໂລມໃຫ້ເປັນກະສັດຂອງອິສຣາເອນ. ຖາມ: ດາວິດມີຕຳແໜ່ງຫຍັງຢູ່ໃນວັງ? ພຣະເຈົ້າຊົງພຣະຣາຊທານຂອງປະທານໃຫ້ດາວິດແລະໄດ້ນຳເຂົາໃຫ້ມາຢູ່ຖືກບ່ອນ. ພຣະເຈົ້າຊົງເຮັດເຊັ່ນດຽວກັນສຳລັບພວກເຮົາທຸກໆຄົນ. ສົນທະນາເຣື່ອງວິນຍານຮ້າຍທີ່ມາສິງຊາອູນ.

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

10. ສົນທະນາຄຳຖາມຂໍ້ 1 ແລະ 2 ໃນທ້າຍສຸດຂອງບົດຮຽນ. ອ້ອນວອນຂໍໃຫ້ພຣະເຈົ້າຊົງປະທານສາຍຕາທີ່ສາມາດເບິ່ງເຫັນຈິດໃຈມະນຸດເໝືອນດັ່ງພຣະອົງ.

*ສຈ. ດຣ. ສົດນີ ຄານ*

# ຄໍາແນະນໍາສໍາລັບຄຣູສອນ

## ບົດຮຽນທີ 8

## ຕໍ່ສູ້ກັບຍັກຕາຂຽວ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ຊາມູເອນທີນຶ່ງ 18: 1-16

**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ຊາມູເອນທີນຶ່ງ 18--19

**ຈຸດສໍາຄັນຂອງບົດຮຽນນີ້:** ຄວາມອິດສາສາມາດທໍາລາຍແມ່ນກະທັ່ງຄວາມສັມພັນທີ່ໃກ້ຊິດ.

**ຄໍາຖາມເພື່ອການສໍາຣວດ:** ທ່ານຊົມຊື່ນຍິນດີໃນຄວາມສໍາເຣັດຂອງຄົນອື່ນໄດ້ດີເທົ່າໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອອະທິບາຍບັນຫາທີ່ຈະເກີດຂຶ້ນເພາະຄວາມອິດສາ ແລະເພື່ອຫາວິທີແກ້ໄຂ.

### ແຜນສໍາລັບການສອນ

### ນໍາເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ກ່ອນການຮຽນໃຫ້ຂຽນຂໍ້ຄວາມນີ້ໃສ່ກະດານໄວ້: "ຄິດຫາເພື່ອນທີ່ດີນຶ່ງຄົນ. ເປັນຫຍັງຄົນຜູ້ນັ້ນຈຶ່ງເປັນເພື່ອນທີ່ດີຂອງທ່ານ? ໃຫ້ບາງຄົນຕອບຄໍາຖາມໂດຍບໍ່ໃຫ້ບອກຊື່ຈິງຂອງເພື່ອນເຫຼົ່ານັ້ນ. ຊອກເບິ່ງລັກສະນະຂອງເພື່ອນທີ່ດີມີແນວໃດແດ່? ສົນທະນາວ່າລັກສະນະເຫຼົ່ານັ້ນສໍາຄັນແນວໃດໃນການເປັນເພື່ອນທີ່ດີ? ແນະນໍາບົດຮຽນແລະບອກວ່າ ມື້ນີ້ຈະໄດ້ສຶກສາເບິ່ງຄວາມສັມພັນລະຫວ່າງດາວິດ ແລະໂຢນາທານ. ນອກນັ້ນຍັງຈະໄດ້ສຶກສາວ່າຖາມ: ຄວາມອິດສາຈະສາມາດເຣັດຫຍັງແດ່ຕໍ່ຄວາມສັມພັນ?

### ນໍາພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ໃຫ້ຜູ້ທີ່ຊໍານານໃນການອ່ານຜູ້ນຶ່ງອ່ານ ຊາມູເອນທີນຶ່ງ18: 1-16.

3. ຂຽນຫົວຂໍ້ໃຫຍ່ຂອງບົດຮຽນໃສ່ກະດານ ຫລືຂຽນໃສ່ໂປສເຕີໄວ້ລ່ວງໜ້າ:

ເສັ້ນທາງຂອງຄວາມເປັນມິດ (18:1-4)

ກ. ແມ່ນໃຜສອງຄົນທີ່ກໍາລັງເລີ້ມເສັ້ນທາງຂອງຄວາມເປັນມິດ?

ຂ. ທ່ານຄິດວ່າເປັນຫຍັງຄວາມສັມພັນນີ້ຈຶ່ງເກີດຂຶ້ນ?

ຄ. ຄວາມສັມພັນປະເພດໃດກໍາລັງເກີດຂຶ້ນລະຫວ່າງໂຢນາທານແລະດາວິດ?

ວິທີໃຫ້ກຽດຄວາມສໍາເຣັດຂອງຄົນອື່ນແບບບໍ່ຈິງໃຈ (18: 5)

ກ. ທ່ານຄິດວ່າຊາອູນຄິດແນວໃດຕໍ່ດາວິດໃນຕອນນີ້?

ຂ. ພິຈາຣະນາເບິ່ງຄວາມໝາຍຂອງຂໍ້ຄວາມຕໍ່ໄປນີ້, "ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດຮູ້ເຈຕນາແທ້ ຂອງການປະພຶດທີ່ຜູ້ອື່ນໆເບິ່ງແລ້ວປາກົດວ່າດີພໍສົມຄວນ."

ເມື່ອຄົນອື່ນມາຍາດເອົາການສເລີມສລອງຂອງທ່ານ (18:6-9)

ກ. ແມ່ນຫຍັງແທ້ ທີ່ເຮັດໃຫ້ຊາອູນໃຈຮ້າຍ?

ຂ. ຄວາມອິດສາເຮັດຫຍັງໃຫ້ກັບຊາອູນ?

ຄ. ເປັນຫຍັງຊາອູນຈຶ່ງພາດໂອກາດໃນການສລອງຊັຍຊະນະ?

ເກີນກວ່າການແຍກ (18: 10-11)

ກ. ພວກເຮົາສັງເກດໄດ້ແນວໃດວ່າຊາອູນເປັນຄົນສອງໜ້າໃນການດຳເນີນຊີວິດ?

ຂ. ເພາະຄວາມອິດສາ, ຊາອູນເຮັດຫຍັງໃຫ້ດາວິດ?

ຄ. ດາວິດກຳລັງຄິດແນວໃດໃນຕອນນີ້?

ຕົ້ນຕໍແລະໝາກຜົນ: ຕົ້ນຂອງຄວາມອິດສາແລະມິດພາບ (18: 12-16)

ກ. ທ່ານເຄີຍຮູ້ຜູ້ໃດຜູ້ນຶ່ງບໍ່ທີ່ເປັນຄົນໂຊກດີຢູ່ເລື້ອຍໆບໍ່ວ່າເຂົາຈະເຮັດຫຍັງກໍຕາມ? ທ່ານມີຄວາມຮູ້ສຶກແນວໃດແດ່ກ່ຽວກັບຄົນ ຄົນນັ້ນ?

ຂ. ເປັນຫຍັງດາວິດຈຶ່ງສຳເຣັດໃນທຸກຢ່າງທີ່ເຂົາເຮັດ?

ຄ. ເປັນຫຍັງຊາອູນຈຶ່ງເກີດມີ "ຄວາມຢ້ານດາວິດ" (18:12,15,29)

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

4. ພິຈາຣະນາຄຳຖາມ: ທ່ານຮູ້ສຶກແນວໃດເມື່ອເຫັນຄົນອື່ນມີຄວາມສຳເຣັດ? ນຳພາການສົນທະນາຄຳຖາມຕໍ່ໄປນີ້:

ກ. ເວລາໃດທ່ານເກີດມີຄວາມອິດສາ?

ຂ. ຄວາມອິດສາເຮັດຫຍັງໃຫ້ທ່ານ?

ຄ. ທ່ານຈະລະງັບຄວາມອິດສາໄດ້ດ້ວຍວິທີໃດ?

5. ແນະນຳໃຫ້ທຸກຄົນອ່ານຄຳນຳໃນບົດຮຽນນີ້ຊຶ່ງອາດຈະມີຄຳຕອບສຳລັບການລະງັບຄວາມອິດສາບັງບຽດ. ໃຫ້ທຸກຄົນເອົາໃຈໃສ່ໃນຂໍ້ຄວາມທີ່ວ່າ, "ວິທີຈະເອົາຊະນະຄວາມອິດສາຄືພິສູດເບິ່ງຕາຂຽວຂອງຕົວເອງ ແລະຕັ້ງໃຈໃຊ້ເວລາກັບຄວາມສັມພັນເພື່ອເຫັນແກ່ ຣາຊອານາຈັກຂອງພຣະເຈົ້າ."

*ສຈ. ດຣ. ສິດນີ ຄານ*

## ຄຳແນະນຳສຳລັບຄຣູສອນ
## ບົດຣຽນທີ 9
## ຄວາມຈົງຮັກພັກດີຖືກທົດສອບ

---

**ຂໍ້ພຣະຄັມພີສຳລັບບົດຣຽນນີ້:** ຊາມູເອນທີນຶ່ງ ໒໐: 1-18, 35-4໒

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ຊາມູເອນທີນຶ່ງ ໒໐

**ຈຸດສຳຄັນຂອງບົດຣຽນນີ້:** ການເລືອກແລະການຕິດຕາມທາງທີ່ຖືກຕ້ອງໃນຊີວິດອາດຈະຄັດແຍ້ງກັບຄວາມຈົງຮັກພັກດີອື່ນໆ, ຊຶ່ງອາດຈະໝາຍເຖິງຄວາມຈົງຮັກພັກດີຕໍ່ເຖິງຄອບຄົວ.

**ຄຳຖາມເພື່ອການສຳຣວດ:** ມີຄວາມຈົງຮັກພັກດີແນວໃດແດ່ທີ່ເຮັດໃຫ້ທ່ານບໍ່ສາມາດເລືອກ ແລະຕິດຕາມທາງທີ່ຖືກຕ້ອງໃນຊີວິດ?

**ຈຸດປະສົງຂອງບົດຣຽນນີ້:** ເພື່ອພິຈາຣະນາເບິ່ງຄວາມສຳຄັນຂອງຄວາມຈົ່ງຮັກພັກດີຕໍ່ຄອບຄົວແລະມິດພາບໃນການເລືອກແລະການຕິດຕາມທາງທີ່ຖືກຕ້ອງໃນຊີວິດ.

### ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຖາມ: ແມ່ນຫຍັງເຮັດໃຫ້ຄວາມສັມພັນເຂັ້ມແຂງ? ນຳພານັກຣຽນໃຫ້ຄິດເຖິງຜູ້ໃດຜູ້ນຶ່ງ ຫລືສິ່ງໃດສິ່ງນຶ່ງທີເຮົາມີຄວາມຈົງຮັກພັກດີນຳ (ຂຽນຄຳຕອບໃສ່ກະດານໄວ້) ຖາມ: ຄວາມຈົງຮັກພັກດີມີສ່ວນແນວໃດແດ່? ຄວາມຈົງຮັກຮັກດີແລະຄວາມສັມພັນເຄີຍຂັດກັນບໍ່? ໃຫ້ເວລາຕອບຫລືໃຫ້ຕົວຢ່າງ. ແນະນຳບົດຣຽນຊຶ່ງຈະເວົ້າເຖິງຄວາມຈົງຮັກພັກດີຂອງໂຢນາທານຕໍ່ດາວິດເພື່ອນຂອງລາວ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

໒. ອ່ານຊາມູເອນທີນຶ່ງ ໒໐:1-4. ໃຫ້ນັກຣຽນຕອບຄຳຖາມຕໍ່ໄປນີ້:
   - ກ. ດາວິດມີບັນຫາແນວໃດ?
   - ຂ. ທ່ານຄິດວ່າເປັນຫຍັງໂຢນາທານຈຶ່ງປ້ອງກັນພໍ່ຂອງລາວ?
   - ຄ. ດາວິດຮູ້ເຣື່ອງຫຍັງແດ່ກ່ຽວກັບຊາອູນ ຊຶ່ງຄອບຄົວຂອງຊາອູນບໍ່ໄດ້ຮູ້?
   - ງ. ມີຄຳເວົ້າແນວໃດທີ່ບອກເຖິງຄວາມຈົງຮັກພັກດີຂອງໂຢນາທານ?

3. ໃຫ້ຜູ້ນຶ່ງອ່ານ ໒໐:5-18. ນຳພາກຸ່ມສົນທະນາເຣື່ອງຕໍ່ໄປນີ້:
   - ກ. ດາວິດມີແຜນການແນວໃດ?
   - ຂ. ອະທິບາຍວ່າ "ວັນສລອງເດືອນອອກໃໝ່" ແມ່ນຫຍັງ? (ມື້ເດືອນອອກໃໝ່ເປັນມື້ທຳອິດຫລັງຈາກມື້ດັບ ແລະເປັນມື້ແລກໃນຮອບຂອງດວງເດືອນ ແລະເປັນມື້ແລກຂອງເດືອນໃນປະຕິທິນ. ຄົນຕ່າງໆຊາດໃນເຂດນັ້ນພາກັນໄຫວ້ວອນຫາດວງເດືອນ ແລະເຂົາເຈົ້າຖືວ່າມື້ເດືອນອອກໃໝ່ເປັນສັນຍາລັກຂອງການເກີດໃໝ່ ແລະກຳລັງຂອງພຣະເຈົ້າຂອງພວກເຂົາ).
   - ຄ. ດາວິດຈະທົດສອບຊາອູນວິທີໃດ?

ງ. ໂຢນາທານຄິດແນວໃດກ່ຽວກັບແຜນການຂອງດາວິດ?

ຈ. ເປັນຫຍັງໂຢນາທານຈຶ່ງຕັດສິນໃຈຍາກແທ້ໃນຄວາມຈົງຮັກພັກດີຂອງລາວຕໍ່ດາວິດ ແລະຕໍ່ຊາອູນ?

4. ອ່ານ ຊ20:19-34 ແລ້ວສລູບສິ່ງທີ່ເກີດຂື້ນໂດຍຖາມວ່າ:

ກ. ໂຢນາທານມີແຜນການແນວໃດທີ່ຈະບອກໃຫ້ດາວິດຮູ້?

ຂ. ຊາອູນຮູ້ສຶກແນວໃດເມື່ອທ່ານຮູ້ວ່າດາວິດບໍ່ໄດ້ຢູ່ຮ່ວມໂຕະໃນງານສລອງ?

ຄ. ທ່ານຄິດວ່າຊາອູນຮູ້ສຶກແນວໃດໃນທຸກຢ່າງທີ່ກຳລັງເກີດຂື້ນກັບລາວ?

ງ. ໂຢນາທານໄດ້ເຫັນສະພາບທີ່ແທ້ຈິງຂອງຊາອູນດ້ວຍວິທີໃດ?

ຈ. ໂຢນາທານຕັດສິນໃຈແນວໃດຫລັງຈາກມີການປະທະກັບພໍ່ຂອງລາວແລ້ວ?

5. ອ່ານ ຊ20:35-42. ນຳພາກຸ່ມເພື່ອສົນທະນາຄຳຖາມຕໍ່ໄປນີ້:

ກ. ເປັນຫຍັງໂຢນາທານແລະດາວິດຈຶ່ງຮ້ອງໄຫ້ໃສ່ກັນ? (ສະແດງຄວາມໂສກເສົ້າໃນສິ່ງທີ່ເກີດຂື້ນ)

ຂ. ໂຢນາທານແລະດາວິດໄດ້ຕົກລົງກັນຫຍັງແດ່ກ່ອນພວກເຂົາຈະແຍກທາງກັນ? (ເບິ່ງ ຊ20:42)

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

6. ຖາມ: ຄວາມຈົງຮັກພັກດີຂອງທ່ານຢູ່ໃສ? ໃຫ້ເວລາຕອບແລະອະທິບາຍວ່າເປັນຫຍັງ? (ສອງ ຫລືສາມຄົນ)

7. ຊັກຊວນແຕ່ລະຄົນໃຫ້ເບິ່ງການເລືອກຂອງໂຢນາທານ. ຖາມ ແລະສົນທະນາ: ທ່ານເຄີຍພົບປັນຫາແນວນີ້ມາກ່ອນບໍ່? ມີຄວາມຈົງຮັກພັກດີແນວໃດແດ່ທີ່ກີດກັ້ນບໍ່ໃຫ້ທ່ານເຮັດໃນສິ່ງທີ່ຖືກຕ້ອງ? ການເຮັດໃນສິ່ງທີ່ຖືກຕ້ອງໄດ້ປ່ຽນສິ່ງທີ່ທ່ານເຄີຍຈົງຮັກພັກດີບໍ່? ທ່ານອາດຈະໃຊ້ຕົວຢ່າງຈາກຊີວິດຂອງທ່ານເອງ. ອ້ອນວອນປິດການສຶກສາພຣະທັມ ແລະຂໍພຣະເຈົ້າຊົງນຳພາໃຫ້ທຸກຄົນໄດ້ຕັດສິນໃຈຢ່າງຖືກຕ້ອງ.

*ສຈ. ດຣ. ສີດນີ ຄານ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 10
# ປະພຶດຕົວຢ່າງສງ່າງາມໃນໂລກທີ່ບໍ່ໄວ້ໜ້າກັນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຊາມູເອນທີນຶ່ງ 24: 2-15; 26: 6-12

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ຊາມູເອນທີນຶ່ງ 24--26

**ຈຸດສຳຄັນຂອງບົດຮຽນນີ້:** ການຮູ້ຈັກບັງຄັບຕົນເອງເວລາຕໍ່ສູ້ກັບຄົນທີ່ຕໍ່ຕ້ານທ່ານ ແລະຄວາມຄິດເຫັນຂອງທ່ານຄືລັກສະນະທີ່ຈະຕ້ອງປູກສ້າງ.

**ຄຳຖາມເພື່ອການສຳຣວດ:** ພວກເຮົາຈະເປັນຄົນທີ່ຈະເຣີນແລ້ວ ແລະຜ່ອນຄຳເວົ້າແລະການກະທຳທີ່ເປັນການສຽດສີກັບຄົນອື່ນໆໃນໂລກທີ່ສີວິໄລແລ້ວໄດ້ວິທີໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຫາວິທີທາງທີ່ຈະເປັນຄົນທີ່ສີວິໄລຂຶ້ນ ແລະຜ່ອນຄຳເວົ້າແລະການກະທຳທີ່ເປັນການສຽດສີກັບຄົນອື່ນໆໃນໂລກທີ່ສີວິໄລແລ້ວ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເລີ້ມການຮຽນດ້ວຍຄຳຖາມ ແລະໃຫ້ເວລານັກຮຽນຜູ້ນຶ່ງຕອບ:
    ກ. ທ່ານເຄີຍຖືກຄວາມເຈັບຊ້ຳເພາະຜູ້ໃດຜູ້ນຶ່ງບໍ່?
    ຂ. ທ່ານຮູ້ສຶກແນວໃດກັບຄົນທີ່ເຮັດໃຫ້ທ່ານເຈັບຊ້ຳ?
    ຄ. ເມື່ອໂອກາດເປັນຂອງທ່ານ, ທ່ານຈະເຮັດແນວໃດກັບຄົນຜູ້ນັ້ນ?

(ແນະນຳບົດຮຽນວ່າ ພວກເຮົາຈະໄດ້ຮຽນຮູ້ເຖິງວິທີທີ່ຖືກຕ້ອງໃນການໂຕ້ຕອບຄວາມເຈັບຊ້ຳໃນຊີວິດ)

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ເອົາແຜນທີ່ອິສຣາເອັນຕິດໄວ້ຂ້າງໜ້າຫ້ອງຮຽນ. ຊີ້ໃຫ້ນັກຮຽນເຫັນວ່າເມືອງເອນເກດີຢູ່ບ່ອນໃດ. ເບິ່ງຫົວຂໍ້ "ຄວາມເມດຕາເປັນສິ່ງທີ່ເລືອກໄດ້(24:1-4)," ອະທິບາຍວ່າໃນຕອນນີ້ດາວິດແລະກະສັດຊາອູນກຳລັງຢູ່ໃສ.

3. ທ່ານອາດຈະພິມບົດຮຽນພາກຕໍ່ໄປນີ້ ແລ້ວເຮັດກອບປີ້ຫລາຍໆໃບເພື່ອແຈກຢາຍໃຫ້ນັກຮຽນ:

## "ປະພຶດຕົວຢ່າງສງ່າງາມໃນໂລກທີ່ບໍ່ໄວ້ໜ້າກັນ"

ຊາມູເອນທີນຶ່ງ 24:2-15; 26:6-12

(1) ຄວາມເມດຕາເປັນສິ່ງທີ່ເລືອກໄດ້ (24:1-4)
    ກ. ເປັນຫຍັງຊາອູນຈຶ່ງນຳຂ້າດາວິດຢ່າງຈິງໃຈແທ້?
    ຂ. ຄົນຂອງດາວິດຢາກເຮັດແນວໃດກັບສະຖານະການຕອນຢູ່ໃນຖ້ຳ?
    ຄ. ດາວິດເຮັດຫຍັງໃຫ້ຊາອູນບໍ່?

(2) ຄວາມຮູ້ສຶກເປັນສິ່ງກີດກັ້ນ (24:5-7)

ກ. ເປັນຫຍັງຄວາມຮູ້ສຶກ (ຈິດສຳນຶກ) ຈຶ່ງກີດກັ້ນດາວິດ?

ຂ. ເປັນຫຍັງດາວິດຈຶ່ງນັບຖືຊາອູນ?

ຄ. ມີຕົວຢ່າງໃນປັດຈຸບັນນີ້ບໍ່ ກ່ຽວກັບບຸກຄົນທີ່ຄວນໄດ້ຮັບການນັບຖື?

(3) ສງົບເສິກຊົ່ວຄາວ (24:8-15)

ກ. ທ່ານຄິດວ່າດາວິດຮູ້ສຶກແນວໃດໃນຕອນນີ້?

ຂ. ແມ່ນຫຍັງຈະເກີດຂຶ້ນຖ້າດາວິດເຮັດຕາມຄຳແນະນຳຂອງລູກນ້ອງ?

ຄ. ແມ່ນຫຍັງເຮັດໃຫ້ດາວິດເປັນຜູ້ນຳທີ່ດີ?

ງ. ສິ່ງເຫລົ່ານີ້ເຮັດໃຫ້ເຣື່ອງຂັດແຍ້ງກັນຈົບລົງບໍ່, ຫລືເປັນພຽງການສງົບເສິກຊົ່ວຄາວ?

(4) ເມື່ອລັກສະນະ ຫລືນິສັຍສຳຄັນກວ່າການຜິດຫລັກ (26:6-12)

ກ. ທ່ານຄິດວ່າເປັນຫຍັງດາວິດຈຶ່ງເອົາຄົນ (ອະບີຊາຍ) ຕິດຕາມໄປນຳ ເວລາເຂົາໄປຫາຊາອູນ?

ຂ. ຊາອູນຢູ່ໃສເວລາດາວິດໄປເຖິງ?

ຄ. ອະບີຊາຍແນະນຳດາວິດແນວໃດ?

ງ. ເປັນຫຍັງດາວິດຈຶ່ງບໍ່ເຮັດຕາມຄຳແນະນຳຂອງອະບີຊາຍ?

ຈ. ດາວິດເຮັດຫຍັງໃຫ້ກະສັດຊາອູນໃນຕອນນີ້?

4. ຂໍໃຫ້ນັກຮຽນຕອບຄຳຖາມຕໍ່ໄປນີ້:

ກ. ຄວາມຮູ້ສຶກ ຫລືຈິດສຳນຶກ ຊ່ວຍພວກເຮົາໃຫ້ເຮັດໃນສິ່ງທີ່ຖືກຕ້ອງສເມີໄປບໍ່?

ຂ. ເປັນຫຍັງບາງຄົນບໍ່ມີຄວາມຮູ້ສຶກເລີຍ?

ຄ. ພວກເຮົາຈະເຮັດຢ່າງໃດເພື່ອໃຫ້ຄວາມຮູ້ສຶກຂອງເຮົາໄດ້ຊ່ວຍເຮົາໃຫ້ເຮັດໃນທາງທີ່ດີຕລອດໄປ?

ງ. ເປັນຫຍັງດາວິດຈຶ່ງອາສັຍຄວາມຮູ້ສຶກຂອງລາວໄດ້?

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

5. ໃຫ້ນັກຮຽນຕອບຄຳຖາມຕໍ່ໄປນີ້:

ກ. ທ່ານຄິດວ່າພວກເຮົາກຳລັງຢູ່ໃນໂລກທີ່ບໍ່ໄວ້ໜ້າກັນບໍ່?

ຂ. ຖ້າຢູ່, ຄຣິສຕຽນຈະຈະເຣີນກ້າວໜ້າໄດ້ວິທີໃດໃນໂລກນີ້?

ຄ. ພວກເຮົາຈະເປັນຄົນທີ່ຈະເຣີນແລ້ວ ແລະຜ່ອນຄຳເວົ້າແລະການກະທຳທີ່ເປັນການສງຽດສີ ກັບຄົນອື່ນໆ ໃນໂລກທີ່ສີວິໄລແລ້ວໄດ້ວິທີໃດ?

6. ໃຫ້ແຕ່ລະຄົນຄິດ ແລະຕອບຄຳຖາມນີ້ໃນໃຈ: ທ່ານຈະເຮັດແນວໃດ (ເທື່ອໜ້າ) ເມື່ອມີຄົນເຮັດໃຫ້ທ່ານເຈັບຊ້ຳ? ອ້ອນວອນຂໍພຣະເຈົ້າຊົງນຳພາເວລາພວກເຮົາເກີດມີຄວາມຄິດຢາກແກ້ແຄ້ນ; ຂໍພຣະເຈົ້າໃຫ້ພວກເຮົາມີທັສນະທີ່ຖືກຕ້ອງຕໍ່ຜູ້ທີ່ເຮັດໃຫ້ເຮົາເຈັບຊ້ຳ.

*ສາ. ດຣ. ສີດນີ ຄານ*

<u>ບົດແນະນຳຄູສອນ</u>

<u>ບົດຮຽນທີ 11</u>

# <u>ອວຍພອນຄອບຄົວຜູ້ຮັບໃຊ້</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ຊາມູເອນສອງ 7:1-17

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ຊາມູເອນສອງ 2:1-4; 5:1--7:29

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຈົ້າສັນຍາວ່າ ອານາຄົດຄອບຄົວຜູ້ຮັບໃຊ້ຈະແຈ່ມໃສ

**<u>ຄຳຖາມເພື່ອການສຳຣວດ:</u>** ພຣະເຈົ້າໄດ້ສັນຍາກັບບັນພະບຸຣຸດດາວິດແລ້ວ ເຮົາຈະຮ້ອນໃຈອັນໃດອີກ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອສອນໃຫ້ຮູ້ວ່າຊົງສັນຍາກັບດາວິດນັ້ນສຳຄັນຕໍ່ພວກເຮົາ.

<u>ໜ້າທີ່ອັນສຳຄັນຂອງຄຣິສຕຽນທຸກຄົນມີດັ່ງນີ້</u>

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳພາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## <u>ແຜນສຳລັບການສອນ</u>

1. ຫລັງຈາກອ້ອນວອນແລ້ວ ຖາມນັກຮຽນວ່າ ມີໃຜແດ່ຮູ້ວ່າພຣະເຈົ້າມີພຣະຄຸນແກ່ຕົນເອງ?

2. ແຈກຢາຍເຈັ້ຍທີ່ຕຽມໄວ້ກ່ອນແລ້ວໃຫ້ນັກຮຽນທຸກຄົນ. ໃນນັ້ນໃຫ້ພິມດີດຫລືຂຽນວ່າ *"ເນື່ອງຈາກວ່າພຣະເຈົ້າມີພຣະຄຸນອັນຍິ່ງໃຫຍ່ຕໍ່ຂ້າພະເຈົ້າ ສິ່ງທີ່ຂ້າພະເຈົ້າຢາກຕອບພຣະຄຸນພຣະເຈົ້າຫລາຍ ທີ່ສຸດແມ່ນ "* ບອກໃຫ້ນັກຮຽນຂຽນອັນສຳຄັນທີ່ສຸດທີ່ຢາກເຮັດແຕ່ຢ່າງດຽວ.

3. ໃຫ້ເວລານັກຮຽນຈັກເລັກນ້ອຍແລ້ວຈຶ່ງສອນບົດຮຽນວັກທີ 1 **ດາວິດຄຶດເຖິງຫີບຄຳສັນຍາ 7:1-2**

ກ. ເມື່ອດາວິດຢູ່ຢ່າງສງົບສຸກຈາກເສິກສົງຄາມ ແລະມີພຣະຣາຊວັງສ້າງດ້ວຍໄມ້ສົນຣາຄາແພງເພິ່ນຄຶດເຖິງພຣະເຈົ້າ. ທ່ານເດ ເມື່ອຢູ່ສບາຍຄືວັນນີ້ແລ້ວຄຶດເຖິງພຣະເຈົ້າຊ່ອຍຢ່າງໃດ?
ຂ. ດາວິດຄຶດເຖິງຫີບພຣະສັນຍາຂອງພຣະເຈົ້າທີ່ເອົາໄວ້ໃນຕູບຜ້າເຕັນ.
ຄ. ດາວິດຄຶດເຖິງທີ່ມາຂອງຕົນເອງ ຈຶ່ງຮູ້ວ່າພຣະເຈົ້າມີພຣະຄຸນ.
ງ. ດາວິດເພິ່ນຢູ່ໃນພຣະຣາຊວັງ ແຕ່ຫີບພຣະສັນຍາຂອງພຣະເຈົ້າຢູ່ຕູບຜ້າເຕັນເປັນການບໍ່ເໝາະສົມ ດັ່ງນັ້ນເພິ່ນຈຶ່ງວາງແຜນຈະສ້າງພຣະວິຫານໃຫ້ພຣະເຈົ້າ.
ຈ. ຖາມນັກຮຽນ: ທ່ານຂຽນແນວໃດແດ່ໃນເຈັ້ຽທີ່ຢາຍ? ໃຫ້ນັກຮຽນເກັບໄວ້ເບິ່ງເອງເພາະມັນເປັນຄຳປະສົງຂອງ

ນັກຣຽນຕໍ່ພຣະເຈົ້າ. ແລ້ວພຣະເຈົ້າຈະອວຍພອນຕາມນັ້ນ.

**4. ບົດຮຽນວັກທີ 2 ພຣະເຈົ້າຊົງເປັນຜູ້ລ້ຽງ 7:3-7**

ກ. ນອກຈາກດາວິດຄິດຢາກສ້າງພຣະວິຫານແລ້ວ ເພິ່ນໄດ້ປຶກສານຳນາທານ ເປັນການສະແດງອອກວ່າບໍ່ເຮັດຕາມໃຈ

ຂ. ນາທານແມ່ນປະໂລຫິດປະຈຳພຣະຣາຊວັງໃນສມັຍຂອງດາວິດ ເຫັນວ່າພຣະເຈົ້າຊົງຢູ່ກັບດາວິດ. ເພິ່ນຈຶ່ງເຂົ້າໃຈວ່າເປັນການຖືກຕ້ອງ.

ຄ. ນາທານເຫັນນິມິດພຣະເຈົ້າທາງຄວາມຝັນຂໍ້ 5-6 "*ເຮົາຍົກຍ້າຍໄປນຳພວກເຈົ້າ*" ແປວ່າຊົງຢູ່ກັບໄພ່ພົນຂອງພຣະອົງ ບໍ່ແມ່ນຢູ່ໃນພຣະວິຫານ.

ງ. ໃຫ້ນາທານບອກດາວິດວ່າ "*ເຈົ້າບໍ່ແມ່ນຜູ້ທີ່ຈະສ້າງວິຫານໃຫ້ເຮົາຢູ່*" ຫາກຈະເວົ້າຕາມພາສາອັງກິດແມ່ນ "*ເຈົ້າແມ່ນຜູ້ທີ່ຈະສ້າງວິຫານໃຫ້ເຮົາຢູ່ບໍ່*" ຄຳນີ້ເປັນຄຳຖາມຫລາຍກວ່າຄຳບອກເລົ່າ. ເມື່ອອ່ານຈົນຮອດຂໍ້ 17 ແລ້ວຈະໄດ້ໃຈຄວາມວ່າ ພຣະເຈົ້າເປັນຜູ້ລ້ຽງດູແລະເບິ່ງແຍງແລະຊອກບ່ອນຢູ່ໃຫ້ດາວິດ ບໍ່ແມ່ນດາວິດຊອກປຸກສ້າງວິຫານໃຫ້ພຣະເຈົ້າ.

**5. ຊົງອວຍພອນຕລອດໄປ 7:8-17**

ກ. ຫລັງຈາກດາວິດສິ້ນຊີວິດພຣະເຈົ້າຈະອວຍພອນໃຫ້ລູກຊາຍເພິ່ນເປັນເຈົ້າຊີວິດອົງຕໍ່ໄປ.

ຂ. ອານາຈັກຂອງເພິ່ນຈະເຂັ້ມແຂງດ້ານການທະຫານ, ດ້ານການປົກຄອງ ແລະດ້ານເສຖກິດ.

ຄ. ພຣະເຈົ້າພໍພຣະທັຍໃຫ້ລູກຊາຍຂອງດາວິດຈະເປັນຜູ້ສ້າງວິຫານ.

ງ. ພຣະເຈົ້າຈະຮັກລາວຄືພໍ່ຮັກລູກ.

ຈ. ອານາຈັກນີ້ຈະໝັ້ນຄົງຢູ່ຊົ່ວນິຣັນດອນ.

ສ. "*ຕຳແໜ່ງຂອງເຈົ້າຈະບໍ່ມີສິ້ນສຸດ*" ໝາຍເຖິງຕຳແໜ່ງຂອງດາວິດຈະມີຢູ່ສືບໆໄປ.

<u>ຄຳຖາມ:</u>

1. ດາວິດຕັ້ງໃຈຈະສ້າງພຣະວິຫານພຣະເຈົ້າ ແຕ່ເປັນຫຍັງພຣະເຈົ້າບໍ່ໃຫ້ເພິ່ນສ້າງ?

2. ພຣະເຈົ້າບອກວ່າເພິ່ນຍົກຍ້າຍໄປນຳພວກເຂົາ ໝາຍຄວາມວ່າແນວໃດ?

3. ເປັນຫຍັງພຣະເຈົ້າຈຶ່ງອວຍພອນດາວິດ?

*ສຈ. ດຣ. ທູນພັນ ວົງສຸຣິດທ໌*

# ບົດແນະນຳຄູສອນ
# ບົດຮຽນທີ 12
# ບາບໃນອຳນາດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຊາມູເອນສອງ 11:2-15; 12-1-15
**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຊາມູເອນສອງ 11--12
**ຈຸດສຳຄັນຂອງບົດຮຽນນີ້:** ບອກໃຫ້ຮູ້ວ່າການໃຊ້ອຳນາດຂົ່ມເຫງຜູ້ອື່ນນຳໄປເຖິງພຣະພິໂຣດ
**ຄຳຖາມເພື່ອການສຳຣວດ:** ເປັນຫຍັງຄົນເຮົາຈຶ່ງບໍ່ຮູ້ວ່າພຣະເຈົ້າຊົງເບິ່ງຢູ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສອນເຮົາວ່າການກະທຳຜິດຂອງດາວິດເປັນບົດຮຽນທີ່ດີສຳລັບເຮົາ.

**ໜ້າທີ່ອັນສຳຄັນຂອງຄຣິສຕຽນທຸກຄົນມີດັ່ງນີ້**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳພາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ບຸກຄົນໃນບົດຮຽນວັນນີ້ມີ 1. ດາວິດ ກະສັດອິສຣາເອນ. 2. ນາທານປະໂລຫິດປະຈຳພະຣາຊວັງຂອງດາວິດ. 3. ນາງບັດເຊບາ ຍິງງາມ 4. ອູຣີອາ ຜົວຂອງບັດເຊບາ 5. ເອລີອັມ ພໍ່ຂອງນາງບັດເຊບາ 6. ນາຍພົນໂຢອາບ ຜູ້ບັນຊາການທະຫານຂອງດາວິດປະຈຳການທີ່ແນວໜ້າ. ຂຽນຊື່ແລະໜ້າທີ່ຕຳແໜ່ງ ຂອງທຸກຄົນໄວ້ກະດານເພື່ອນັກຮຽນຈະເຂົ້າໃຈ. ຫລືຫາກມີຮູບແຕ້ມໃນລັກສະນະ 6 ຄົນນີ້ແຮງເປັນການດີ.

### 1. ອ່ານ ຊາມູເອນສອງ 11:2-15 ດາວິດເຮັດບາບ

ກ. ຂໍ້ 1-5 ໃນຂະນະທີ່ນາຍພົນໂຢອາບຕໍ່ສູ້ສັດຕຣູຢູ່ແນວໜ້າ ດາວິດຖືກໂຈມຕີຢູ່ແນວຫລັງ.
ຂ. ຂໍ້ 6 ດາວິດໃຊ້ອຳນາດສັ່ງນາຍພົນໂຢອາບໃຫ້ສົ່ງ ອູຣີອາກັບບ້ານເພື່ອຈະປົກປິດຄວາມບາບ
ຄ. ຂໍ້ 7-9 ກົນອຸບາຍຂອງດາວິດ ເຮັດຄືເປັນຫ່ວງ
ງ. ຂໍ້ 10 ຊັກຖາມອູຣີອາໃນເຣື່ອງບໍ່ກັບບ້ານຫາເມັຽ
ຈ. ຂໍ້ 11 ອູຣີອາ ສະແດງຄວາມຈົງຮັກພັກດີ ຕໍ່ຊາດແລະຕໍ່ຫີບຄຳສັນຍາ
ຊ. ຂໍ້ 12-13 ດາວິດວາງແຜນຄັ້ງທີສອງ
ຍ. ຂໍ້ 14-15 ດາວິດຂ້າອູຣີອາ ດ້ວຍອຳນາດ.

### 2. ອ່ານ ຊາມູເອນສອງ 12:1-4 ຄວາມກ້າຫານແລະວິທີເວົ້າຂອງນາທານ

ກ. ຂໍ້ 1 ນາທານຮັບຄຳສັ່ງຈາກອົງພຣະຜູ້ເປັນເຈົ້າໃຫ້ໄປບອກດາວິດເຣື່ອງເພິ່ນເຮັດຜິດບາບ
1. ນາທານເປັນຄົນສັດຊື່ຕໍ່ພຣະເຈົ້າເພິ່ນເວົ້າທຸກຢ່າງທີ່ພຣະເຈົ້າສັ່ງ

ຂ. ນາທານໃຊ້ສະຕິປັນຍາຊອກເອົາເຣື່ອງສົມທຽບມາເວົ້າ.

ຂ. ຂໍ້ 2-4 ວິທີເວົ້າຂອງນາທານຜູ້ຮັບໃຊ້ພະເຈົ້າ.

**3. ອ່ານຊາມູເອນສອງ 12: 5-15**

ກ. ຂໍ້ 5-6 ດາວິດໃຈຮ້າຍເມື່ອໄດ້ຟັງເຣື່ອງຄົນຮັ່ງມີຂົ່ມເຫງຄົນຍາກຈົນ ໂດຍສາບານຕໍ່ພຣະເຈົ້າວ່າ ຈະຕ້ອງຂ້າຊາຍຮັ່ງມີຜູ້ນັ້ນ ແລະໃຫ້ລາວຊົດໃຊ້ຄືນສີ່ເທົ່າ.

ຂ. ຂໍ້ 7 ນາທານເປີດເຜີຽເຣື່ອງສົມທຽບຢ່າງເປີດແປນ.

ຄ. ຂໍ້ 8-12 ນາທານກ່າວຜົນສະທ້ອນຂອງການກະທຳຂອງດາວິດ

ງ. ຂໍ້ 13ກ ດາວິດສາຣະພາບບາບຢ່າງວ່ອງໄວ ເປັນຜົນດີແກ່ເພິ່ນ.

ຈ. ຂໍ້ 13ຂ ການຜ່ອນໂທດກັມເມື່ອສາຣະພາບ

ສ. ຂໍ້ 14 ບາບກຳນຳໄປເຖິງລູກຫລານ

ຊ. ຂໍ້ 15 ໝົດໜ້າທີ່ຜູ້ຮັບໃຊ້.

<u>ຄຳຖາມ:</u>

1. ແມ່ນໃຜເປັນຜູ້ເຮັດວຽກຕາງໜ້າຂອງດາວິດທີ່ແນວໜ້າ?

2. ດ້ວຍເຫດໃດດາວິດຈຶ່ງຫລົງມັກນາງບັດເຊບາ?

3. ດາວິດປົກປິດຄວາມບາບຂອງເພິ່ນດ້ວຍວິທີໃດ?

4. ວິທີປົກປິດຄວາມບາບຂອງດາວິດແລ້ວເກີດເປັນເຣື່ອງໃຫຍ່ແນວໃດ?

5. ດາວິດເຮັດຜິດຢ່າງລັບລີ້ ພຣະເຈົ້າສະແດງໃຫ້ອິສຣາເອນຢ່າງເປີດເຜີຍຢ່າງໃດ?

6. ຄຳສາຣະພາບຜິດຂອງດາວິດຊ່ອຍຫຍັງໄດ້ແດ່?

*ສຈ. ດຣ. ທູນພັນ ວົງສຸຣິດທ໌*

# ບົດແນະນຳຄູສອນ
# ບົດຮຽນທີ 13
# ບັນຫາໃຫຍ່ໃນຄອບຄົວ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຊາມູເອນສອງ 13:20-21, 30-33; 14:25--15:10; 18:5-15, 33
**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຊາມູເອນສອງ 13--19
**ຈຸດສຳຄັນຂອງບົດຮຽນນີ້:** ສອນໃຫ້ຮູ້ວ່າຄວາມຜິດບາບຂອງເຮົາອາຈຕົກມາເຖິງລູກເຮົາ
**ຄຳຖາມເພື່ອການສຳຣວດ:** ເຮົາຈະເຮັດແນວໃດເພື່ອຈະເປັນພໍ່ແມ່ທີ່ນຳພຣະພອນມາສູ່ລູກ
**ຈຸດປະສົງຂອງບົດຮຽນນີ້:** ເພື່ອເຮົາຈະໄດ້ຮຽນຮູ້ຈາກຄວາມຜິດພາດຂອງດາວິດ.

**ໜ້າທີ່ອັນສຳຄັນຂອງຄຣິສຕຽນທຸກຄົນມີດັ່ງນີ້**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນຳພາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ເນື່ອງຈາກວ່າບົດຮຽນນີ້ເປັນບົດຮຽນຍາວແລະຍັງມີຊື່ຄົນຕັ້ງຫລາຍຄົນໃນເຣື່ອງນີ້ ດັ່ງນັ້ນຈຶ່ງຂໍແນະນຳໃຫ້ຈັດຫາວິທີຂຽນກະດານເສັຽກ່ອນວ່າໃຜເປັນໃຜຕາມບົດ 13 ຫາກບໍ່ດັ່ງນັ້ນທ່ານຈະສອນຍາກ ເພາະວ່າທ່ານບໍ່ສາມາດແຍກອອກວ່າແຕ່ລະຄົນແມ່ນໃຜ? ບອກນັກຮຽນວ່າ ບົດຮຽນນີ້ເປັນເຣື່ອງຂອງຜົນຂອງຄວາມບາບທີ່ດາວິດສ້າງ ມັນໄດ້ກັບມາສນອງເພິ່ນແລະຄອບຄົວຂອງເພິ່ນເອງ.

### 1. ອ່ານ 13:20-21 ຜົນກັມຕາມມາ

ກ. ອຳໂນນລູກຊາຍຂອງດາວິດມັກນາງຕາມາຜູ້ເປັນນ້ອງສາວຕ່າງແມ່.
ຂ. ຢ້ານວ່າເປັນໄປບໍ່ໄດ້ເພາະເປັນອ້າຍນ້ອງກັນຈຶ່ງວາງແຜນຕົວເປັນໄຂ້.
ຄ. ໃຫ້ດາວິດຜູ້ເປັນພໍ່ສົ່ງນ້ອງສາວມາເບິ່ງແຍງແລ້ວຂົ່ມຂືນນາງ.
ງ. ຫລັງຈາກຂົ່ມຂືນພໍໃຈແລ້ວກໍໄລ່ໜີໄປຫາອ້າຍຊື່ອັບຊາໂລມ
ຈ. ອັບຊາໂລມຈອບອອຍນ້ອງແລະຮັບນ້ອງໄປຢູ່ນຳ ດ້ວຍຄວາມແຄ້ນໃຫ້ນ້ອງຊາຍອຳໂນນ.
ສ. ດາວິດຮູ້ເຣື່ອງແລ້ວໃຈຮ້າຍ ແຕ່ບໍ່ໄດ້ລົງໂທດລູກຊາຍແຕ່ຢ່າງໃດ ດ້ວຍເຫດນີ້ອັບຊາໂລມຈຶ່ງຄຽດໃຫ້ດາວິດຜູ້ເປັນພໍ່.
ຊ. ຄຳຖາມທີ່ໜ້າຄິດມີຢູ່ວ່າ ເປັນຫຍັງດາວິດຈຶ່ງບໍ່ເຮັດຫຍັງ? ຍ້ອນເພິ່ນຄິດເຫັນເພິ່ນເອງຂົ່ມຂືນນາງບັດເຊບາບໍ່? ຫລືເພິ່ນອາດຈະຄິດເຫັນພຣະເຈົ້າບໍ່ລົງໂທດເພິ່ນ?

### 2. ອ່ານ 13:30-33 ອັບຊາໂລມແກ້ແຄ້ນໃຫ້ນ້ອງສາວ

ກ. ອັບຊາໂລມຖ້າຫລືອາດວາງແຜນເຖິງສອງປີ ແລ້ວຈັດງານກິລາແຖຂົນແກະ.

ຂ. ຈຳເປັນຕ້ອງເຊີນອ້າຍນ້ອງຜູ້ອື່ນມາໃນງານເພື່ອບໍ່ໃຫ້ອຳໂນນ ແລະດາວິດສົງສັຍ

ຄ. ເກືອເຫລົ້າອຳໂນນໃຫ້ເມົາແລ້ວກໍໃຫ້ຄົນໃຊ້ຂ້າລາວ

ງ. ສ່ວນອ້າຍນ້ອງຜູ້ອື່ນພາກັນປົບໜີຄວາມຕາຍ

ຈ. ດາວິດຮັບຂ່າວແລ້ວກໍໂສກເສົ້າເສັຽໃຈ, ໝູບໜ້າລົງດິນ ຫລືເພິ່ນອາດຈະອ້ອນວອນພຣະເຈົ້າ

ສ. ດາວິດໄວ້ທຸກໃຫ້ອຳໂນນສາມປີ

ຊ. ອັບຊາໂລມໂຕນໜີໄປຢູ່ເມືອງເກຊູ ເພາະຢ້ານດາວິດ.

## 3. ອ່ານ 14: 25--15:10 ການຄືນດີເພື່ອກະບົດ

ກ. ໂຢອາບຂ້າຣາຊການປະຈຳພຣະຣາຊວັງດາວິດວາງແຜນເອົາອັບຊາໂລມກັບຄືນອິສຣາເອນ

ຂ. ອັບຊາໂລມກັບຄືນແຕ່ບໍ່ໄດ້ຢູ່ໃນວັງ ເພາະດາວິດຍັງຄຽດບໍ່ຢາກເຫັນໜ້າ

ຄ. ເວລາຜ່ານໄປສອງປີ ອັບຊາໂລມຢາກພົບດາວິດ ຈຶ່ງມີເຣື່ອງກັບໂຢອາບ

ງ. ດາວິດຕ້ອນຮັບອັບຊາໂລມເຂົ້າໃນວັງ

ຈ. ສີ່ປີຕໍ່ມາອັບຊາໂລມເປັນກະບົດ, ດາວິດພາທະຫານໜີເຂົ້າປ່າ

## 4. ອ່ານ 18:5-15, 31-33 ຊະຕາກັມອັບຊາໂລມ

ກ. ດາວິດກັບມາຕໍ່ສູ່ອັບຊາໂລມຜູ້ເປັນລູກຊາຍ.

ຂ. ສົງຄາມຄັ້ງຍິ່ງໃຫຍ່ຣະຫວ່າງພໍ່ກັບລູກ ທະຫານພໍ່ຂ້າທະຫານລູກຕາຍ 20.000 ຄົນ

ຄ. ອັບຊາໂລມຖືກຂ້າແບບງ່າຍໆ

ງ. ດາວິດໂສກເສົ້າເສັຽໃຈທີ່ລູກຊາຍຕາຍ

<u>ຄຳຖາມ:</u>

1. ທ່ານເຫັນຫຍັງໃນບົດຮຽນນີ້?

2. ແມ່ນໃຜເປັນຜູ້ກໍເຣື່ອງ? ແລະແມ່ນໃຜເປັນຜູ້ເສັຽໃຈຫລາຍກວ່າຜູ້ອື່ນໃນເຣື່ອງນີ້?

3. ພວກລູກຫລາຍຄົນຂອງດາວິດມີເຣື່ອງຊົ່ວຮ້າຍຕ່າງໆແລະຕາຍໝົດແລ້ວ ແຕ່ເປັນຫຍັງດາວິດຈຶ່ງບໍ່ຕາຍ?

4. ເຮົາຈະເອົາບົດຮຽນນີ້ມາໃຊ້ໃນຊີວິດເຮົາຢ່າງໃດ?

*ສຈ. ດຣ. ທູນພັນ ວົງສຸຣິດ*

# ບົດແນະນຳຄູສອນ
# ບົດຮຽນເຣື່ອງການຟື້ນພຣະຊົນ
# ເຊື່ອວ່າພຣະເຢຊູຟື້ນແທ້

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 24:1-12, 36-43
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ລູກາ 24
**ຈຸດສຳຄັນຂອງບົດຮຽນນີ້:** ການປາກົດຕົວຫລັງຈາກຟື້ນແລ້ວເປັນກຳລັງໃຈແກ່ຜູ້ເຊື່ອ
**ຄຳຖາມເພື່ອການສຳຣວດ:** ການຟື້ນພຣະຊົນຊວນໃຫ້ເຊື່ອຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮູ້ວ່າເຮົາເຊື່ອໃນການຟື້ນພຣະຊົນຢ່າງໃດ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ອີສເຕີເປັນເຣື່ອງໃຫຍ່ແລະສຳຄັນສຳລັບຊາວຄຣິສຕຽນທຸກຄົນ ຫາກບໍ່ມີວັນອີສເຕີຄວາມເຊື່ອຂອງຄຣິສຕຽນກໍເປັນໝັນເສັຽແລ້ວ, ຫາກທ່ານຖາມຄົນລາວທີ່ບໍ່ເຊື່ອຫລືບໍ່ຮູ້ພຣະເຢຊູວ່າວັນອີສເຕີແມ່ນວັນສຳຄັນອັນໃດທ່ານຈຶ່ງໄດ້ພັກການ? ຂ້າພະເຈົ້າເຊື່ອວ່າຫລາຍຄົນຄົງບໍ່ຮູ້ຈັກທີ່ມາຂອງວັນນັ້ນ ສຳລັບທ່ານແລະຂ້າພະເຈົ້າແລ້ວເຮົາຮູ້ແລ້ວວ່າແມ່ນວັນສຳຄັນ ແຕ່ເຮົາຈຳເປັນຈະຕ້ອງຮຽນແລະອ່ານໃຫ້ເຂົ້າໃຈເພື່ອຈະຊ່ອຍພີ່ນ້ອງທັງຫລາຍທີ່ບໍ່ຮູ້ໃຫ້ເພິ່ນຮູ້ແລະເຂົ້າໃຈ. ວິທີທີ່ດີຄືທ່ານຈະຕ້ອງອ່ານພຣະກິດຕິຄຸນທັງສີ່ເຫລັ້ມເພື່ອຈະມີຄຳອະທິບາຍໄດ້ກວ້າງໄກກວ່າ.

### ຂໍໃຫ້ຜູ້ນຶ່ງອ່ານ ລູກາ 24:1-12

ກ. ພວກຜູ້ຍິງໄປອຸບໂມງໃນເຊົ້າມືດວັນອາທິດ (ວັນອີສເຕີ) ໃນເມື່ອຮູ້ວ່າມີອຸປະສັກຄື: ຈະກິ້ງຫີນອັດປາກອຸບໂມງໄດ້ຢ່າງໃດ? ພວກທະຫານຍາມຈະໃຫ້ເຂົ້າໄປບໍ່? ແຕ່ພວກນາງກໍໄປຍ້ອນວ່າ ເຊື່ອໃນພຣະອົງ, ມີໃຈເຫລື້ອມໃສໃນພຣະອົງ, ມີໃຈຮັກແພງພຣະອົງຫລາຍໄປກວ່າຄວາມຢ້ານກົວ.

ຂ. ເມື່ອໄປຮອດທີ່ອຸບໂມງ ກ້ອນຫີນນັ້ນກໍເຄື່ອນອອກແລ້ວ, ອາດຈະນຳມາໃຊ້ໃນຊີວິດຂອງເຮົາຄືເວລາເຮົາຈະຮັບໃຊ້ພຣະເຈົ້າເບິ່ງຄືມີບັນຫາບາດໄປແທ້ ແລ້ວພຣະເຈົ້າກໍເປີດຫົນທາງໃຫ້.
ຄ. ເທວະດາຖາມວ່າ ເປັນຫຍັງຈຶ່ງຊອກຫາຄົນເປັນໃນໝູ່ຄົນຕາຍ ໝາຍຄວາມວ່າ ພຣະເຢຊູບໍ່ແມ່ນຄົນຕາຍ ດ້ວຍວ່າພຣະອົງເປັນຄືນມາແລ້ວ.
ງ. ເທວະດາເຮັດໃຫ້ພວກຜູ້ຍິງລະນຶກເຖິງຄຳເວົ້າຂອງພຣະເຢຊູໄດ້ກ່າວວ່າ ວັນຖ້ວນສາມຈະເປັນຄືນມາ.

ຂໍໃຫ້ຜູ້ນຶ່ງອ່ານ ລູກາ 24:13-35

ກ. ສາວົກສອງຄົນທີ່ເດີນທາງໄປເອມາອູດບໍ່ແມ່ນພວກສິບສອງຄົນ
ຂ. ຜູ້ນຶ່ງຊື່ກະປາໂລ ໃນຂໍ້ 16, ຜູ້ທີສອງແມ່ນນາງມາຣີອາເມັຽຂອງກະປາໂລເອງ ໃນໂຢຮັນ 19:25
ທັງສອງຄົນນີ້ເຝົ້າຢູ່ໃກ້ໄມ້ກາງແຂນຕອນພຣະອົງສິ້ນໃຈ, ດ້ວຍເຫດນີ້ລູກາຈຶ່ງຮ້ອງເຂົາວ່າສາວົກ.
ຄ. ເຂົາພາກັນຍ່າງ ເດີນທາງຈາກເຢຣູຊາເລັມເພື່ອຈະໄປເມືອງເອມາອູດ ປະມານ 6000 ວາ ຫລື 15 ໄມ.
ງ. ທັງສອງລົມກັນເຣື່ອງການຕາຍ ແລະການຟື້ນພຣະຊົນ ແລ້ວພຣະເຢຊູກໍສະເດັດໄປກັບເຂົາ
ຈ. ທັງສອງເດີນທາງຮ່ວມກັບພຣະເຢຊູໂດຍບໍ່ຮູ້ວ່າແມ່ນພຣະເຢຊູ ເພາະຖືກປິດບັງໂດຍຣິດເດດ.
ສ. ພຣະເຢຊູຮ້ອງເຂົາວ່າຄົນໂງ່ທີ່ບໍ່ເຊື່ອຟັງຜູ້ປະກາດພຣະທັມ, ດັ່ງນັ້ນຜູ້ທີ່ບໍ່ເຊື່ອຟັງທຸກຄົນຈຶ່ງເປັນຄົນໂງ່.
ຊ. ຊົງເປີດເຜີຍໂດຍການຫັກເຂົ້າຈີ່ ແລ້ວກໍຫາຍໄປຕໍ່ໜ້າເຂົາ ຈຶ່ງເຮັດໃຫ້ເຂົາຮູ້ວ່າໄດ້ເດີນທາງກັບພຣະອົງ.
ຍ. ທັງສອງໄດ້ປະກາດເຣື່ອງຂອງພຣະອົງແກ່ສາວົກສິບເອັດຄົນຟັງ.

ຂໍໃຫ້ຜູ້ນຶ່ງອ່ານ ລູກາ 24:36-43

ກ. ຊົງປາກົດຖ້າມກາງເຂົາທີ່ຫ້ອງຊັ້ນເທິງໂດຍຣິດອຳນາດ ຄ້າຍຄືໃນໜັງຫາຍຕົວຜ່ານຝາເຮືອນເຂົ້າມາ.
ຂ. ພຣະເຢຊູຊົງຮູ້ຄວາມຄິດຂອງເຂົາໆ ຄິດວ່າພຣະອົງແມ່ນຜີ.
ຄ. ພຣະເຢຊູຊົງບອກເຂົາວ່າຜີບໍ່ມີຮ່າງກາຍ ແປວ່າພຣະອົງບໍ່ແມ່ນຜີ. ແລະຍັງຖາມອີກວ່າພວກທ່ານມີຫຍັງ
ກິນບໍ່? ເພື່ອບອກໃຫ້ຮູ້ວ່າແມ່ນພຣະອົງຄືນມາຈາກຕາຍແທ້ໆ.
ງ. 4 ຢ່າງເປັນຫລັກຖານວ່າພຣະອົງຟື້ນຈາກຕາຍຄື;
1. ພວກຜູ້ຍິງເຂົ້າໄປເບິ່ງໃນອຸບໂມງແລ້ວບໍ່ມີສົບພຣະອົງ.
2. ເທວະດາທັງສອງເປັນພະຍານແກ່ພວກຜູ້ຍິງ.
3. ປາກົດແກ່ສາວົກຕາມທາງ ແລະຫ້ອງຊັ້ນເທິງ.
4. ໂທມາເປັນຜູ້ພິສູດຮ່າງກາຍຂອງພຣະອົງ.

<u>ຄຳຖາມ:</u> ໃຫ້ເບິ່ງຄຳຖາມໃນບົດຝຶກຫັດ.

*ສຈ. ດຣ. ທູນພັນ ວົງສຸຣິດທ໌*